BLOOM AWARD

BLOOM AWARD

ຄຳແນະນຳ Bloom Award 2026

19 ພະຈິກ 2026

https://next.granshan.com/lo/awards/bloom/guidelines

ສາລະບານ

ໃຜຄວນສົ່ງຜົນງານ?

ໄລຍະຜົນງານທີ່ມີສິດສະໝັກ

ກຸ່ມອັກສອນ ແລະ ປະເພດສີ

ກຸ່ມອັກສອນ

ປະເພດສີ

ເກນການປະເມີນ

ຄະນະກຳມະການ

50 Best of the Best Jury

ຂະບວນການຕັດສິນ ແລະ ລາງວັນ

ທ່ານມີໂອກາດໄດ້ຮັບຫຍັງ

Supporting Foundries' Choice Award

ສາມຂັ້ນຕອນການຕັດສິນ

ສິ່ງທີ່ຜູ້ຊະນະຈະໄດ້ຮັບ

ປະເພດ ແລະ ຄ່າສະໝັກ

ກຳນົດການສົ່ງຜົນງານ ແລະ ຂະບວນການຕັດສິນ

ໄລຍະການສົ່ງຜົນງານ

ຫຼັງປິດຮັບຜົນງານ

GRANSHAN Supporting Foundries Club

ລະບົບສົ່ງຜົນງານ ແລະ ຮູບແບບຕາມປະເພດສີ

1. ການອອກແບບບັນນາທິການ ແລະ ການພິມ
2. ໂປສເຕີ (ສົ່ງພິມ ແລະ ດິຈິຕອນ)
3. ການອອກແບບບັນຈຸພັນ
4. ສື່ດິຈິຕອນ ແລະ ການອອກແບບສ່ວນຕິດຕໍ່ຜູ້ໃຊ້
5. ກຣາຟິກເຄື່ອນໄຫວ ແລະ ພາບເຄື່ອນໄຫວ
6. ການອອກແບບພື້ນທີ່ ແລະ ປະສົບການ
7. ແຄມເປນ
8. ອັດຕະລັກທາງສາຍຕາ ແລະ ການສ້າງແບຣນ
9. ຜົນງານທົດລອງ, ຍັງບໍ່ເຜີຍແຜ່ ແລະ ສິລະປະການຂຽນອັກສອນ

ກົດລະບຽບການເຂົ້າຮ່ວມ ແລະ ຄຸນຄ່າຮ່ວມ

ຄຳຖະແຫຼງກ້ານຄຸນສົມບັດ ແລະ ລິຂະສິດ

ລະບົບອັກສອນອັນເປັນທີ່ຮັກ, ໂລກອັນເປັນທີ່ຮັກ

ລາງວັນລະດັບໂລກດ້ານການອອກແບບເພື່ອການສື່ສານນອກເໜືອຈາກອັກສອນລາຕິນເປັນຄັ້ງທຳອິດຂອງໂລກ ຕັດສິນໂດຍຜູ້ຊ່ຽວຊານທີ່ອ່ານ ແລະ ໃຊ້ອັກສອນຂອງທ່ານໃນພາສາແມ່

ຮຽນ ທ່ານສຸພາບສະຕີ ແລະ ສຸພາບບຸລຸດທີ່ນັບຖື!

ພວກເຮົາຍິນດີຢ່າງຍິ່ງທີ່ທ່ານສົນໃຈສົ່ງຜົນງານເຂົ້າຮ່ວມການປະກວດດ້ານການອອກແບບເພື່ອການສື່ສານນອກເໜືອຈາກອັກສອນລາຕິນເປັນຄັ້ງທຳອິດຂອງໂລກ – **GRANSHAN Bloom Award – ຄັ້ງທຳອິດ 2026.**

ຂ້າງລຸ່ມນີ້ ພວກເຮົາໄດ້ລວບລວມຂໍ້ມູນທັງໝົດທີ່ທ່ານຕ້ອງການສຳລັບການສົ່ງຜົນງານໄວ້ຢ່າງລະອຽດ. ຄຳແນະນຳນີ້ມີຈຸດປະສົງເພື່ອອະທິບາຍໃຫ້ຊັດເຈນ ແລະ ເຂົ້າໃຈ່າຍວ່າ ການສົ່ງຜົນງານເຂົ້າປະກວດມີລັກສະນະແນວໃດ ແລະ ຂະບວນການຕັດສິນດຳເນີນແນວໃດ. ພວກເຮົາຕ້ອງການໃຫ້ທ່ານມີທັງແນວທາງ ແລະ ຄວາມເຂົ້າໃຈທີ່ຈຳເປັນໃນການນຳສະເໜີຜົນງານໃຫ້ໂດດເດັ່ນທີ່ສຸດ – ເພື່ອໃຫ້ຄວາມຄິດສ້າງສັນຂອງທ່ານເບັ່ງບານຢ່າງເຕັມທີ.

ທ່ານຍັງສາມາດອ່ານຂໍ້ມູນທັງໝົດນີ້ໃນ PDF ຢູ່ພາກດາວໂຫຼດ. (https://next.granshan.com/files/bloom-guidelines-2026-v4.pdf)

ກະລຸນາປະຕິບັດຕາມຄຳແນະນຳຢ່າງລະອຽດກ່ຽວກັບສ່ວນປະກອບທີ່ຕ້ອງສົ່ງ – ເຊິ່ງໄດ້ອະທິບາຍໄວ້ຢ່າງລະອຽດທີ່ນີ້! ທ່ານຍັງສາມາດເຂົ້າເບິ່ງ ພາກຄຳຖາມທີ່ພົບເລື້ອຍ **(https://next.granshan.com/1st-granshan-bloom-communication-design-competition-20252026/bloom-faq)**.

ພວກເຮົາລໍຄອຍຮັບຜົນງານຂອງທ່ານ!

ທີມງານ GRANSHAN

ໃຜຄວນສົ່ງຜົນງານ?

GRANSHAN Bloom Award ເຊີນຊວນ:

- ນັກອອກແບບ, ນັກຈັດວາງຕົວອັກສອນ ແລະ ຜູ້ອຳນວຍການສ້າງສັນ
- ສະຕູດິໂອ, ເອເຈນຊີ ແລະ ທີມອອກແບບພາຍໃນອົງກອນ
- ສຳນັກພິມ, ສະຖາບັນວັດທະນະທຳ ແລະ ອົງການທີ່ບໍ່ຂຶ້ນກັບລັດຖະບານ
- ນັກສຶກສາ ແລະ ຜູ້ທີ່ຫາກໍຮຽນຈົບ
- ແຍຣມ ແລະ ອົງກອນທີ່ເຮັດວຽກໃນບໍລິບົດຂອງລະບົບອັກສອນນອກເໜືອຈາກອັກສອນລາຕິນ

ຖ້າຜົນງານຂອງທ່ານໃຊ້ການຈັດວາງຕົວອັກສອນເພື່ອເຊື່ອມໂຍງວັດທະນະທຳ, ເລົ່າເລື່ອງ ແລະ ສ້າງອັດຕະລັກ – ການປະກວດນີ້ເໝາະສຳລັບທ່ານ.

ໄລຍະຜົນງານທີ່ມີສິດສະໝັກ

ຜົນງານທີ່ສ້າງຂຶ້ນ ຫຼື ເຜີຍແຜ່ເປັນຄັ້ງທຳອິດລະຫວ່າງ ມັງກອນ **2023** ແລະ ທັນວາ **2026** ມີສິດສົ່ງເຂົ້າປະກວດ. ວັນທີເຜີຍແຜ່ ຫຼື ສ້າງສຳເລັດຕ້ອງຢູ່ໃນໄລຍະນີ້. ຜົນງານທີ່ສ້າງຂຶ້ນກ່ອນມັງກອນ 2023 ບໍ່ມີສິດສະໝັກ ເຖິງແມ່ນວ່າຍັງມີການໃຊ້ງານ ຫຼື ເຜີຍແຜ່ຢູ່ກໍຕາມ.

ກຸ່ມອັກສອນ ແລະ ປະເພດສື

GRANSHAN Bloom Award ຍົກຍ້ອງຄວາມເປັນເລີດດ້ານຕົວອັກສອນຂ້າມວັດທະນະທຳ, ລະບົບອັກສອນ ແລະ ສາຂາການອອກແບບ. ຫົວໃຈຂອງລາງວັນແມ່ນໂຄງສ້າງຄະນະກຳມະການທີ່ເປັນເອກະລັກ ເຊິ່ງປະສານ ຄວາມເຂົ້າໃຈວັດທະນະທຳຢ່າງເລິກເຊິ່ງ ກັບ ທັກສະວິຊາຊີບ: ທຸກການສົ່ງຜົນງານຈະໄດ້ຮັບການພິຈາລະນາໂດຍຜູ້ຊ່ຽວຊານທີ່ເຂົ້າໃຈທັ້ງລະບົບອັກສອນທີ່ໃຊ້ ແລະ ສື່ທີ່ຜົນງານນັ້ນປາກົດ.

ກຸ່ມອັກສອນ

ກຸ່ມອັກສອນຂອງພວກເຮົາສະທ້ອນຄວາມອຸດົມສົມບູນດ້ານວັດທະນະທຳ ແລະ ການຈັດວາງຕົວອັກສອນຂອງລະບົບອັກສອນທົ່ວໂລກ – ຈາກອາຣັບ ແລະ ຈີນ ໄປຫາກຣີກ, ຍີ່ປຸ່ນ, ເກົາຫຼີ ແລະ ອື່ນໆ. ແຕ່ລະກຸ່ມອັກສອນມີຜູ້ຊ່ຽວຊານທີ່ໃຊ້ອັກສອນນັ້ນໃນພາສາແມ່ ຫຼື ຊ່ຽວຊານໃນອັກສອນຕົ້ນສະບັບ 12–15 ຄົນ ເຊິ່ງເຂົ້າໃຈບໍລິບົດດ້ານພາສາ ແລະ ວັດທະນະທຳຂອງຜົນງານທ່ານຢ່າງເລິກເຊິ່ງ. ແຕ່ລະກຸ່ມອັກສອນປະກອບມີຜູ້ຊ່ຽວຊານສື່ໃນປະເພດສື່ຕ່າງໆ ຕັ້ງແຕ່ການອອກແບບບັນນາທິການ ໄປຫາກຣາຟິກເຄື່ອນໄຫວ, ການອອກແບບພື້ນທີ່ ແລະ ອື່ນໆ.

ປະເພດສື່ບາງປະເພດໄດ້ຮັບການຕັດສິນຮ່ວມກັນໂດຍຜູ້ຊ່ຽວຊານຊຸດດຽວກັນ – ຕົວຢ່າງ ຜູ້ຊ່ຽວຊານການອອກແບບປຶ້ມອາດປະເມີນຜົນງານໂປສເຕີດ້ວຍ – ເພື່ອໃຫ້ໂຄງການຂອງທ່ານໄດ້ຮັບທັງມຸມມອງຈາກຄວາມຮູ້ສະເພາະດ້ານ ແລະ ມຸມມອງທີ່ເຊື່ອມໂຍງຄວາມເປັນເລີດດ້ານຕົວອັກສອນ.

ສຳລັບ ຄັ້ງປີ **2026**, GRANSHAN Bloom Award ເນັ້ນໃສ່ **8** ກຸ່ມອັກສອນ ຕໍ່ໄປນີ້:

- ອັກສອນທີ່ພັດທະນາຈາກອັກສອນອາຣັບ (ອາຣັບ, ເປີເຊຍ, ເຄີດ, ອູຣດູ)
- ອັກສອນອາເມນີ
- ອັກສອນຈີນ (ແບບດັ້ງເດີມ ຫຼື ແບບຫຍໍ້)
- ອັກສອນກຣີກ
- ອັກສອນອາຊີໃຕ້ (ກູຣມູຄີ, ເທວະນາຄະຣີ, ກູຈາຣາຕີ, ເບັງກາລີ, ເຕລູກູ, ກັນນາດາ, ມາລາຢາລໍາ, ທາມິລ, ສິງຫົ່ນ)
- ອັກສອນຍີ່ປຸ່ນ

- ອັກສອນເກົ່າຫຼື
- ອັກສອນອາຊີຕາເວັນອອກສຽງໃຕ້ (ໄທ, ມຽນມາ, ລາວ, ຂະແມ)

ໃນຄັ້ງຕໍ່ໆໄປ ກຸ່ມອັກສອນເຫຼົ່ານີ້ຈະຂະຫຍາຍເພື່ອລວມເອົາລະບົບອັກສອນອື່ນໆ ເຊັ່ນ ອັກສອນຊີຣິລລິກ, ຈໍເຈຍ, ຮີບຣູ ແລະ ອັກສອນຈາກທົ່ວອາຟຣິກາ.

ປະເພດສີ

ຄຽງຄູ່ກັບຄວາມຫຼາກຫຼາຍດ້ານຕົວອັກສອນນີ ການປະກວດຄອບຄຸມ **9** ປະເພດສີ – ແຕ່ລະປະເພດເປັນເວທີສຳລັບຄວາມຄິດສ້າງສັນດ້ານຕົວອັກສອນທີ່ໂດດເດັ່ນ. ແຕ່ລະໂຄງການໄດ້ຮັບການປະເມີນພາຍໃນປະເພດສີທີ່ເລືອກ ໂດຍຜູ້ຊ່ຽວຊານສະເພາະດ້ານນັ້ນ.

ສາມາດສົ່ງຜົນງານໃນຫຼາຍປະເພດສີໄດ້ ແຕ່ຕ້ອງສະໝັກ – ແລະ ຊຳລະຄ່າສະໝັກ – ແຍກກັນໃນແຕ່ລະປະເພດ (ຂໍ້ຍົກເວັ້ນພຽງຢ່າງດຽວແມ່ນສີດສົ່ງຜົນງານເພີ່ມອີກໜຶ່ງຜົນງານໂດຍບໍ່ເສຍຄ່າ ສຳລັບຜົນງານທີ່ສົ່ງກ່ອນ 27 ຕຸລາ 2026). ສາມາດໝາຍລະບຸແຕ່ລະຜົນງານວ່າເປັນໂຄງການຂອງນັກສຶກສາ ຫຼື ໂຄງການຝຶກງານໄດ້ຕາມຄວາມສະໝັກໃຈ.

1 – ການອອກແບບບັນນາທິການ ແລະ ການພິມ
ຜົນງານອອກແບບທີ່ໂດດເດັ່ນໃນບໍລິບົດບັນນາທິການ ເຊິ່ງເນື້ອຫາ ແລະ ການຈັດວາງຕົວອັກສອນປະສານກັນ ເພື່ອສ້າງປະສົບການອ່ານທີ່ໜ້າຕິດຕາມໃນສື່ສິ່ງພິມ ແລະ ສື່ດິຈິຕອນ.

ຮູບແບບທີ່ມີສິດສະໝັກປະກອບມີ:

- ການອອກແບບປຶ້ມ (ເຊັ່ນ ບັນເທີງຄະດີ, ສາລະຄະດີ, ປຶ້ມສິລະປະ, ປຶ້ມລາຍການ)
- ການອອກແບບວາລະສານ ແລະ ໜັງສືພິມ (ສິ່ງພິມ ຫຼື ດິຈິຕອນ)
- ຊຸດຜົນງານບັນນາທິການທີ່ເນັ້ນຕົວອັກສອນ (ຄໍລຳ, ຊຸດວັນນະຄະດີ, ບົດຄວາມຕໍ່ເນື່ອງ)
- ການພິມອິດສະຫຼະ (ວາລະສານອິດສະຫຼະຂະໜາດນ້ອຍ, ປຶ້ມທີ່ຈັດພິມເອງ, ຈົດໝາຍຂ່າວ, ຮູບແບບທົດລອງ)

2 – ໂປສເຕີ **(**ສິ່ງພິມ ແລະ ດິຈິຕອນ**)**
ການອອກແບບໂປສເຕີທີ່ໂດດເດັ່ນໃນບໍລິບົດວັດທະນະທຳ, ການຄ້າ ຫຼື ສັງຄົມ ໂດຍເນັ້ນຂໍ້ຄວາມທີ່ມີພະລັງ, ຄວາມຊັດເຈນດ້ານຕົວອັກສອນ ແລະ ພະລັງທາງສາຍຕາ.

ຮູບແບບທີ່ມີສິດສະໝັກປະກອບມີ:

- ໂປສເຕີດ່ຽວ
- ຊຸດໂປສເຕີ
- ໂປສເຕີຂະໜາດໃຫຍ່ (ເຊັ່ນ ປ້າຍໂຄສະນາ 18/1, ໂປສເຕີກາງແຈ້ງໃນເມືອງ)
- ໂປສເຕີດິຈິຕອນ (ການສະແດງຜ່ານໜ້າຈໍໃນພື້ນທີ່ສາທາລະນະ ຫຼື ພື້ນທີ່ທຸລະກິດ)

3 – ການອອກແບບບັນຈຸພັນ

ບັນຈຸພັນທີ່ມີນະວັດຕະກຳ ແລະ ໃຊ້ງານໄດ້ດີ ເຊິ່ງຍົກລະດັບອັດຕະລັກແບຣນ ແລະ ການມີສ່ວນຮ່ວມຂອງຜູ້ໃຊ້. ເນັ້ນໜັກໃສ່ລາຍລະອຽດດ້ານຕົວອັກສອນ ແລະ ການເລົ່າເລື່ອງທາງສາຍຕາຜ່ານຮູບຊົງ.

ຮູບແບບທີ່ມີສິດສະໝັກປະກອບມີ:

- ບັນຈຸພັນສຳລັບຜະລິດຕະພັນດ່ຽວ
- ກຸ່ມ ແລະ ຊຸດຜະລິດຕະພັນ
- ບັນຈຸພັນທີ່ເນັ້ນຕົວອັກສອນ (ການອອກແບບທີ່ໃຊ້ຕົວອັກສອນເປັນອົງປະກອບຫຼັກທາງສາຍຕາ)

4 – ສື່ດິຈິຕອນ ແລະ ການອອກແບບສ່ວນຕິດຕໍ່ຜູ້ໃຊ້

ແນວທາງການອອກແບບຜ່ານໜ້າຈໍທີ່ສ້າງສັນ ເຊິ່ງພັດທະນາການໂຕ້ຕອບ ແລະ ຄວາມເປັນເລີດດ້ານຕົວອັກສອນໃນພື້ນທີ່ດິຈິຕອນ.

ຮູບແບບທີ່ມີສິດສະໝັກປະກອບມີ:

- ເວັບໄຊ ແລະ ສ່ວນຕິດຕໍ່ຜູ້ໃຊ້
- ແອັບມືຖື
- ສື່ງພິມດິຈິຕອນ / ປຶ້ມອີເລັກໂຕຣນິກ / ປຶ້ມແບບໂຕ້ຕອບ
- ເວັບໄຊສະເພາະກິດ ຫຼື ແພລດຟອມເລົ່າເລື່ອງດິຈິຕອນ

5 – ກຣາຟິກເຄື່ອນໄຫວ ແລະ ພາບເຄື່ອນໄຫວ

ຜົນງານອອກແບບທີ່ດຳເນີນໄປຕາມເວລາ ເຊິ່ງໃຊ້ການຈັດວາງຕົວອັກສອນ ແລະ ການເຄື່ອນໄຫວທາງສາຍຕາເພື່ອເລົ່າເລື່ອງ, ສະແດງແນວຄິດ ຫຼື ຊີ້ນຳຄວາມສົນໃຈ.

ຮູບແບບທີ່ມີສິດສະໝັກປະກອບມີ:

- ພາບເຄື່ອນໄຫວທີ່ເນັ້ນຕົວອັກສອນ
- ລຳດັບພາບຊື່ເລື່ອງ
- ກຣາຟິກເຄື່ອນໄຫວສຳລັບແຄມເປນ, ດົນຕີ, ການສຶກສາ ຫຼື ການສ້າງແບຣນ
- ການທົດລອງຕົວອັກສອນເຄື່ອນໄຫວ
- ການນຳໃຊ້ຟອນປັບຄ່າໄດ້ຢ່າງໂດດເດັ່ນ (ເຊັ່ນ ການປັບນ້ຳໜັກ, ຄວາມກວ້າງ ຫຼື ການປັບຮູບຕົວອັກສອນຕາມຂະໜາດການໃຊ້ແບບເຄື່ອນໄຫວ)

6 – ການອອກແບບພື້ນທີ ແລະ ປະສົບການ

ໂຄງການສື່ສານໃນພື້ນທີ ທີ່ໃຊ້ຕົວອັກສອນ, ພາບ ແລະ ໂຄງສ້າງ ເພື່ອສ້າງປະສົບການໃນສະພາບແວດລ້ອມທາງກາຍະພາບ ຫຼື ແບບປະສົມ.

ຮູບແບບທີ່ມີສິດສະໝັກປະກອບມີ:

- ການອອກແບບນິທັດສະການ ແລະ ງານສະແດງສິນຄ້າ
- ລະບົບນຳທາງ ແລະ ປ້າຍສັນຍາລັກ

- ການຈັດວາງຕົວອັກສອນໃນພື້ນທີ (ສິລະປະຈັດວາງ, ຕົວອັກສອນໃນສະຖາປັດຕະຍະກຳ, ການປະສົມດິຈິຕອນກັບ ວັດຖຸຈິງ)

7 – ແຄມເປນ

ຍຸດທະສາດການສື່ສານແບບປະສານ ຜ່ານຊ່ອງທາງດຽວ ຫຼື ຫຼາຍຊ່ອງທາງ ທີ່ມີການເລົ່າເລື່ອງຜ່ານຕົວອັກສອນ ແລະ ພາບຢ່າງມີພະລັງ.

ຮູບແບບທີ່ມີສິດສະໝັກປະກອບມີ:

- ແຄມເປນສິ່ງພິມ (ວຽກບັນນາທິການ, ໂຄສະນາ, ການສື່ສານສາທາລະນະ)
- ແຄມເປນຂ້າມສື (ສິ່ງພິມ, ດິຈິຕອນ, ສື່ທາງການຍະພາບ)
- ການສື່ສານເພື່ອປະໂຫຍດສາທາລະນະ (ສັງຄົມ, ການເມືອງ, ວັດທະນະທຳ)

8 – ອັດຕະລັກທາງສາຍຕາ ແລະ ການສ້າງແບຣນ

ການອອກແບບອັດຕະລັກແບຣນທີ່ສອດຄ່ອງເປັນໜຶ່ງດຽວ ເຊິ່ງສະແດງບຸກຄະລິກ, ຄຸນຄ່າ ແລະ ບໍລິບົດ ຜ່ານການຈັດວາງ ຕົວອັກສອນ ແລະ ພາສາທາງສາຍຕາ.

ຮູບແບບທີ່ມີສິດສະໝັກປະກອບມີ:

- ລະບົບອອກແບບອົງກອນ / ອັດຕະລັກທາງສາຍຕາ
- ການອອກແບບໂລໂກ
- ການສ້າງແບຣນທີ່ເນັ້ນຕົວອັກສອນ (ອັດຕະລັກທີ່ມີຕົວອັກສອນເປັນຫຼັກ)

9 – ພິນງານທົດລອງ, ຍັງບໍ່ເຜີຍແຜ່ ແລະ ສິລະປະການຂຽນອັກສອນ

ພື້ນທີ່ສຳລັບຜົນງານອິດສະຫຼະ ແລະ ຜົນງານສຳຫຼວດຄວາມເປັນໄປໄດ້ ທີ່ຄົ້ນຫາແນວທາງ, ເຄື່ອງມື ແລະ ເລື່ອງລາວທາງ ວັດທະນະທຳໃໝ່ໆດ້ານຕົວອັກສອນ – ໂດຍສະເພາະໃນບໍລິບົດຂອງລະບົບອັກສອນນອກເໜືອຈາກອັກສອນລາຕິນ.
ຮູບແບບທີ່ມີສິດສະໝັກປະກອບມີ:

- ໂຄງການທີ່ລິເລີ່ມເອງ
- ຕົ້ນແບບຈາກການຄົ້ນຄວ້າ ຫຼື ຕົ້ນແບບເຊິ່ງແນວຄິດ
- ແນວຄິດໄລຍະເລີ່ມຕົ້ນ / ຜົນງານທີ່ກຳລັງພັດທະນາ
- ຜົນງານ ແລະ ການສຳຫຼວດສິລະປະການຂຽນອັກສອນ
- ຜົນງານທີ່ຍັງບໍ່ເຜີຍແຜ່ ຫຼື ຍັງບໍ່ໄດ້ສ້າງເປັນຜົນງານຈິງ
- ການສຳຫຼວດການຈັດວາງຕົວອັກສອນ

ເກນການປະເມີນ

ທຸກຜົນງານທີ່ສົ່ງເຂົ້າ GRANSHAN Bloom Award ໄດ້ຮັບການຕັດສິນດ້ວຍຄວາມເອົາໃຈໃສ່ ແລະ ຄວາມໃຝ່ຮູ້ – ໂດຍຜູ້ຊ່ຽວຊານທີ່ເຫັນຄຸນຄ່າຂອງທັງແນວຄິດທີ່ກ້າຫານ ແລະ ການສ້າງຜົນງານທີ່ປານີດບໍ່ມີຂໍ້ບົກພ່ອງ. ເກນຂອງພວກເຮົາ ສະທ້ອນຄວາມສົມດຸນລະຫວ່າງແນວຄິດ, ທັກສະຝີມື ແລະ ຄວາມກ່ຽວພັນທາງວັດທະນະທຳ ເພື່ອໃຫ້ຜົນງານທີ່ໂດດເດັ່ນໄດ້ຮັບການຍອມຮັບໃນທຸກມິຕິ.

- ແນວຄິດ ແລະ ນະວັດຕະກຳ – ແນວຄິດທີ່ສ້າງຄວາມປະຫຼາດໃຈ, ສ້າງແຮງບັນດານໃຈ ແລະ ຊຸກຍູ້ໃຫ້ສາຂາວິຊາຊີບກ້າວໜ້າ.
- ການສື່ສານ ແລະ ຄວາມຊັດເຈນ – ການອອກແບບທີ່ສື່ສານໄດ້ຢ່າງແມ່ນຍຳ ແລະ ມີຈຸດປະສົງຊັດເຈນ.
- ຄຸນນະພາບທາງສາຍຕາ ແລະ ຄວາມງາມ – ຄວາມງາມ, ຄວາມສົມດຸນ ແລະ ລາຍລະອຽດທີ່ປະສານກັນຢ່າງສົມບູນ.
- ຄວາມເປັນເລີດດ້ານຕົວອັກສອນ – ຄວາມຊໍ່ານານໃນຮູບຊົງຕົວອັກສອນ ແລະ ລະບົບອັກສອນທີ່ຕົວອັກສອນນັ້ນສັ່ງກັດ.
- ທັກສະຝີມື ແລະ ການສ້າງຜົນງານ – ຄວາມປານີດສົມບູນ ເຊິ່ງທຸກອົງປະກອບຖືກຈັດວາງຢ່າງມີຈຸດປະສົງ.
- ຄວາມສະດວກໃນການໃຊ້ ແລະ ການເຮັດວຽກ – ຮູບແບບ ແລະ ການໃຊ້ງານປະສານກັນໄດ້ຢ່າງລຳບລື່ນ.
- ຄວາມກ່ຽວພັນທາງວັດທະນະທຳ ແລະ ສັງຄົມ – ການອອກແບບທີ່ເຂົ້າເຖິງຍຸກສະໄໝ, ສະຖານທີ ແລະ ຜູ້ຮັບສານຂອງຕົນ.

ເຖິງແມ່ນວ່າທຸກເກນຈະມີຄວາມສຳຄັນ ແຕ່ມີສາມເກນທີ່ເປັນຫົວໃຈຂອງພາລະກິດພວກເຮົາ – ແລະ ແຕ່ລະເກນຈະມີນ້ຳໜັກເປັນສອງເທົ່າໃນການປະເມີນຂອງຄະນະກຳມະການ: ແນວຄິດ ແລະ ນະວັດຕະກຳ, ຄວາມເປັນເລີດດ້ານຕົວອັກສອນ, ແລະ ຄວາມກ່ຽວພັນທາງວັດທະນະທຳ ແລະ ສັງຄົມ. ທັ້ງສາມເກນຮ່ວມກັນເປັນສາມຫຼັກທີ່ມີຊີວິດຂອງ GRANSHAN Bloom Award: ປະກາຍແຫ່ງແນວຄິດທີ່ກ້າຫານ, ຄວາມຊໍ່ານານໃນລະບົບອັກສອນຜ່ານທຸກເສັ້ນໂຄ້ງ ແລະ ຊ່ອງວ່າງພາຍໃນຕົວອັກສອນ, ແລະ ພະລັງສະທ້ອນອັນເລິກເຊິ່ງຂອງການອອກແບບທີ່ຢັ່ງຮາກໃນວັດທະນະທຳຂອງຕົນ. ນີ້ແມ່ນຈຸດທີ່ວິໄສທັດພົບກັບທັກສະຝີມື ແລະ ທັ້ງສອງພົບຄວາມໝາຍອັນແທ້ຈິງໃນເລື່ອງລາວ, ສັນຍາລັກ ແລະ ຊຸມຊົນທີ່ຕົນຮັບໃຊ້.

ຄະນະກຳມະການ

ຄະນະກຳມະການຂອງ GRANSHAN Bloom Award ຖືກຈັດຕັ້ງໃຫ້ປະສານຄວາມຊ່ຽວຊານທາງວັດທະນະທຳຢ່າງເລິກເຊິ່ງ ກັບຄວາມເຂົ້າໃຈວິຊາຊີບຢ່າງກວ້າງຂວາງ – ເພື່ອໃຫ້ທຸກການສົ່ງຜົນງານໄດ້ຮັບຄວາມເຂົ້າໃຈໃນບໍລິບົດດ້ານຕົວອັກສອນ, ວັດທະນະທຳ ແລະ ການອອກແບບຢ່າງຄົບຖ້ວນ.

ປະທານກຸ່ມອັກສອນ

ແຕ່ລະກຸ່ມອັກສອນມີປະທານກຸ່ມອັກສອນເປັນຜູ້ນຳ – ເປັນບຸກຄົນທີ່ໄດ້ຮັບຄວາມນັບຖືຢ່າງສູງ ແລະ ການຍອມຮັບລະດັບສາກົນໃນລະບົບອັກສອນນັ້ນ. ໃນຖານະຜູ້ມີຄວາມຮູ້ກວ້າງຂວາງຂ້າມສື ປະທານກຸ່ມອັກສອນຮັບປະກັນວ່າທຸກການສົ່ງຜົນງານໄດ້ຮັບການພິຈາລະນາດ້ວຍຄວາມຖືກຕ້ອງທາງວັດທະນະທຳ ແລະ ຄວາມເຂົ້າໃຈດ້ານການຈັດວາງຕົວອັກສອນ.

ຜູ້ຊ່ຽວຊານສື

ນອກຈາກປະທານກຸ່ມອັກສອນ ແຕ່ລະກຸ່ມອັກສອນຍັງມີຜູ້ຊ່ຽວຊານສື 3–5 ຄົນ ເຊິ່ງທັກສະຂອງພວກເຂົາຄອບຄຸມທັ່ງເກົ້າ

ປະເພດສີຂອງພວກເຮົາ. ເພື່ອຄວາມຊັດເຈນ ປະເພດເຫຼົ່ານີ້ຖືກຈັດເປັນສີ່ກຸ່ມຄວາມຊ່ຽວຊານ:

- ການອອກແບບບັນນາທິການ ແລະ ການພິມ, ໂປສເຕີ, ການອອກແບບບັນຈຸພັນ
- ສື່ດິຈິຕອນ ແລະ ການອອກແບບສ່ວນຕິດຕໍ່ຜູ້ໃຊ້, ກຣາຟິກເຄື່ອນໄຫວ ແລະ ພາບເຄື່ອນໄຫວ
- ການອອກແບບພື້ນທີ່ ແລະ ປະສົບການ, ຜົນງານທົດລອງ, ຍັງບໍ່ເຜີຍແຜ່ ແລະ ສິລະປະການຂຽນອັກສອນ
- ແຄມເປນ, ອັດຕະລັກທາງສາຍຕາ ແລະ ການສ້າງແບຣນ

ຄະນະກຳມະການຂອງແຕ່ລະກຸ່ມອັກສອນມີຕົວແທນຈາກທຸກກຸ່ມຄວາມຊ່ຽວຊານ ເພື່ອໃຫ້ໂຄງການໄດ້ຮັບການພິຈາລະນາສະເໝີຈາກທັງຜູ້ທີ່ຊ່ຽວຊານສື່ທີ່ກ່ຽວຂ້ອງ ແລະ ຜູ້ຊ່ຽວຊານໃນລະບົບອັກສອນຂອງໂຄງການນັ້ນ.

ການເນັ້ນສອງດ້ານນີ້ – ຄວາມຊໍານານໃນລະບົບອັກສອນ ແລະ ຄວາມຮູ້ດ້ານສື – ຮັບປະກັນວ່າຜົນງານຂອງທ່ານໄດ້ຮັບການປະເມີນດ້ວຍຄວາມແມ່ນຍໍາ, ຄວາມເປັນທໍາ ແລະ ຄວາມເລິກເຊິ່ງທີ່ສົມຄວນໄດ້ຮັບ.

50 Best of the Best Jury

ໃນຂັ້ນຕອນສຸດທ້າຍ ຜູ້ຊະນະ Bloom Award ທັງໝົດຈະໄດ້ຮັບການພິຈາລະນາໂດຍ **50 Best of the Best Jury** ເຊິ່ງຄັດເລືອກຜົນງານ 50 Best of the Best ໂດຍບໍ່ເກີນຈໍານວນນີ້. ຄະນະນີ້ລວມບຸກຄົນທີ່ມີຊື່ສຽງທີ່ສຸດບາງຄົນໃນວົງການອອກແບບທົ່ວໂລກ – ປະສານມຸມມອງຈາກຮີດຄອງການອອກແບບຕາເວັນຕົກ ກັບບຸກຄົນຊັ້ນນໍາຈາກໂລກຂອງລະບົບອັກສອນນອກເໜືອຈາກອັກສອນລາຕິນ. ການປະສານນີ້ມີເຈດຕະນາຊັດເຈນ: ເພື່ອຄອບຄຸມທຸກດ້ານຂອງການອອກແບບເພື່ອການສື່ສານ ພ້ອມທັງສືບຕໍ່ເນັ້ນໜັກໃສ່ລະບົບອັກສອນທົ່ວໂລກນອກເໜືອຈາກອັກສອນລາຕິນ ເພື່ອຢືນຢັນຄວາມສໍາຄັນທາງວັດທະນະທໍາຂອງອັກສອນເຫຼົ່ານີ້ໃນລະດັບໂລກ. Stefan Sagmeister ແມ່ນໜຶ່ງໃນຜູ້ທີ່ຢືນຢັນເຂົ້າຮ່ວມແລ້ວ.

ລາຍຊື່ກໍາມະການຈະທະຍອຍປະກາດ ໂດຍຈະເປີດເຜີຍລາຍຊື່ຊຸດທໍາອິດໃນຕົ້ນປີ 2026.

ຂະບວນການຕັດສິນ ແລະ ລາງວັນ

GRANSHAN Bloom Award ໃຊ້ຂະບວນການຕັດສິນສາມຂັ້ນຕອນ ທີ່ອອກແບບມາເພື່ອຍອມຮັບຄວາມເປັນເລີດໃນທຸກຂັ້ນ – ແລະ ເພື່ອໃຫ້ທຸກໂຄງການທີ່ຊະນະໄດ້ຮັບການຍອມຮັບທີ່ມີຄວາມໝາຍ ແລະ ເປັນທີ່ຮັບຮູ້.

ຜົນງານທີ່ສົ່ງທັງໝົດຈະຖືກນໍາສະເໜີຕໍ່ຄະນະກໍາມະການໃນຮູບແບບບໍ່ລະບຸຕົວຕົນ. ແຕ່ລະໂຄງການມີຂໍ້ຄວາມອະທິບາຍຈາກແບບຟອມສະໝັກປະກອບ (ໂດຍບໍ່ມີລາຍລະອຽດທີ່ລະບຸຕົວຕົນ) ແລະ ມີການນໍາສະເໜີດ້ວຍພາບເຄື່ອນໄຫວ ຫຼື ສື່ເຄື່ອນໄຫວ ເມື່ອມີ. ວິທີນີ້ເຮັດໃຫ້ກໍາມະການສາມາດປະເມີນທັງຄຸນນະພາບທາງສາຍຕາຂອງການອອກແບບ ແລະ ການເຮັດວຽກຂອງມັນໃນບໍລິບົດເຄື່ອນໄຫວຕາມທີ່ຕັ້ງໃຈໄວ້.

ທ່ານມີໂອກາດໄດ້ຮັບຫຍັງ

ຜົນງານທີ່ຊະນະແຕ່ລະຜົນງານຈະໄດ້ຮັບ Bloom Award – ເຄື່ອງໝາຍແຫ່ງການຍອມຮັບຂອງ GRANSHAN Bloom Award. ທຸກລາງວັນມີສະຖານະເທົ່າທຽມກັນ; ບໍ່ມີການຈັດລໍາດັບຄໍາ, ເງິນ ຫຼື ທອງແດງ.

ຈາກຜູ້ຊະນະເຫຼົ່ານີ້ **50 Best of the Best Jury** ຈະຄັດເລືອກຜົນງານ **50 Best of the Best** ໂດຍບໍ່ເກີນຈໍານວນນີ້ – ເປັນການຍົກຍ້ອງສູງສຸດຂອງການປະກວດ.

ນອກຈາກນີ້ ພວກເຮົາວາງແຜນຈະມອບ ລາງວັນພິເສດ ຫຼາຍລາງວັນ ໂດຍຮ່ວມມືກັບອົງກອນ ແລະ ສະຖາບັນຄູ່ຮ່ວມງານ. ລາງວັນເຫຼົ່ານີ້ອາດຍົກຍ້ອງໂຄງການທີ່ ຕົວຢ່າງ ສໍາຫຼວດເຄື່ອງມືທົດລອງ ແລະ ເຕັກໂນໂລຊີເກີດໃໝ່, ມີສ່ວນຮ່ວມຢ່າງເລິກເຊິ່ງກັບວັດທະນະທໍາ ແລະ ມໍລະດົກດ້ານຕົວອັກສອນ, ຫຼື ສະແດງພະລັງຂອງການອອກແບບໃນການສ້າງຜົນກະທົບຕໍ່ສັງຄົມ. ລາຍລະອຽດຂອງລາງວັນພິເສດຈະປະກາດເມື່ອມີການຢືນຢັນຄວາມຮ່ວມມືແລ້ວ.

Supporting Foundries' Choice Award

ນອກຈາກລາງວັນຫຼັກຈາກຄະນະກໍາມະການ ຜູ້ຜະລິດແບບຕົວອັກສອນທີ່ສະໜັບສະໜຸນແຕ່ລະລາຍອາດມອບ ການຍົກຍ້ອງພິເສດ: *Foundry's Choice*. ຫຼັງຈາກຄະນະກໍາມະການຕັດສິນຢ່າງເປັນທາງການ ຜູ້ຜະລິດແບບຕົວອັກສອນແຕ່ລະລາຍອາດເລືອກໜຶ່ງໃນໂຄງການທີ່ໄດ້ຮັບລາງວັນ ເຊິ່ງໃຊ້ແບບຕົວອັກສອນຂອງຕົນຢ່າງສ້າງສັນ ແລະ ມີພະລັງເປັນພິເສດ.

ໂຄງການເຫຼົ່ານີ້ຈະ ໄດ້ຮັບການນໍາສະເໜີເປັນຈຸດເດັ່ນສອງຄັ້ງ – ຄັ້ງທໍາອິດໂດຍຜູ້ຜະລິດແບບຕົວອັກສອນເອງຜ່ານຊ່ອງທາງຂອງຕົນ ແລະ ອີກຄັ້ງຜ່ານແພລັດຟອມລະດັບໂລກຂອງ GRANSHAN – ເຮັດໃຫ້ຜົນງານທີ່ຄັດເລືອກ ເປັນທີ່ຮູ້ຈັກ, ມີຄວາມໜ້າເຊື່ອຖື ແລະ ໄດ້ຮັບການປະຊາສໍາພັນເພີ່ມຂຶ້ນ ໃນຊຸມຊົນການອອກແບບສາກົນ.

ສໍາລັບຜູ້ສ້າງຜົນງານ ນີ້ໝາຍເຖິງ ໂອກາດອີກຄັ້ງທີ່ຈະຊະນະ: ນອກເໜືອຈາກ **Bloom Award** ຂອງ **Bloom Award**, ໂຄງການຂອງທ່ານອາດຖືກເລືອກເປັນຜົນງານເດັ່ນໂດຍຜູ້ຜະລິດແບບຕົວອັກສອນຊັ້ນນໍາທີ່ດໍາເນີນງານທົ່ວໂລກ – ເຊື່ອມໂຍງຜົນງານຂອງທ່ານໂດຍກົງກັບຜູ້ຈັດຈໍາໜ່າຍຟອນອິດສະຫຼະທີ່ມີອິດທິພົນທີ່ສຸດບາງລາຍໃນປັດຈຸບັນ.

ສາມຂັ້ນຕອນການຕັດສິນ

ຂັ້ນຕອນທີ 1 – ການປະເມີນໂດຍຄະນະກໍາມະການຜູ້ຊ່ຽວຊານ
ໃນຂັ້ນຕອນນີ້ ກໍາມະການຫຼາຍກວ່າ 100 ຄົນ – ຜູ້ຊ່ຽວຊານໃນປະເພດສື ແລະ ກຸ່ມອັກສອນສະເພາະ – ຈະພິຈາລະນາທຸກການສົ່ງຜົນງານ. ກໍາມະການແຕ່ລະຄົນໃຫ້ຄະແນນຢ່າງເປັນອິດສະຫຼະ ຈາກ 1 (ຕໍ່າ) ຫາ 5 (ສູງ). ຜົນງານທີ່ໄດ້ຄະແນນຕໍ່າກວ່າ 3.0 ຈະບໍ່ຜ່ານໄປຂັ້ນຕໍ່ໄປ ເວັ້ນແຕ່ກໍາມະການຄົນໜຶ່ງສະເໜີຜົນງານນັ້ນອີກຄັ້ງ ພ້ອມເຫດຜົນທີ່ໜັກແໜ້ນ.

ຂັ້ນຕອນທີ 2 – ການຕັດສິນ **Bloom Award**
ທຸກການສົ່ງຜົນງານທີ່ໄດ້ຄະແນນສະເລ່ຍ 3.0 ຂຶ້ນໄປຈະຜ່ານເຂົ້າຂັ້ນຕໍ່ໄປ. ຄະນະກໍາມະການຜູ້ຊ່ຽວຊານຈະປະຊຸມອອນລາຍເພື່ອຫາລືຜົນງານເຫຼົ່ານີ້ຢ່າງເລິກເຊິ່ງ. ຫຼັງຈາກພິຈາລະນາຮ່ວມກັນ ກໍາມະການຈະລົງຄະແນນວ່າ "ເຫັນດີ" ຫຼື "ບໍ່ເຫັນດີ" ຕໍ່ການມອບ Bloom Award:

- ກໍາມະການ 3 ຄົນ: ຕ້ອງມີຢ່າງໜ້ອຍ 2 ສຽງ "ເຫັນດີ"

- ກຳມະການ 4 ຄົນ: ຕ້ອງມີຢ່າງໜ້ອຍ 3 ສຽງ “ເຫັນດີ”
- ກຳມະການ 5 ຄົນ: ຕ້ອງມີຢ່າງໜ້ອຍ 4 ສຽງ “ເຫັນດີ”

ທຸກຜົນງານທີ່ໄດ້ຮັບ Bloom Award ຈະໄດ້ຮັບໃບຮັບຮອງ – ຢືນຢັນວ່າເປັນໜຶ່ງໃນຜົນງານຊະນະປະຈຳປີ.

ຂັ້ນຕອນທີ 3 – Best of the Best
ຈາກຜູ້ຊະນະ Bloom Award ທັງໝົດ **50 Best of the Best Jury** ຈະຄັດເລືອກຜົນງານ **50 Best of the Best** ໂດຍບໍ່ເກີນຈຳນວນນີ້ – ເປັນການຍົກຍ້ອງສູງສຸດຂອງການປະກວດ. ຄະນະຜູ້ຊົ່ຽງຄຸນວຸດທິນີ້ປະກອບມີບຸກຄົນທີ່ມີຊື່ສຽງທີ່ສຸດບາງຄົນໃນວົງການອອກແບບທົ່ວໂລກ.

ການໄດ້ຮັບຊື່ວ່າ “Best of the Best” ໝາຍຄວາມວ່າ ຜົນງານຂອງທ່ານໄດ້ສ້າງຄວາມປະທັບໃຈທ້ຽໃຫ້ແກ່ຜູ້ຊ່ຽວຊານໃນສາຂາຂອງທ່ານ ແລະ ນັກອອກແບບທີ່ມີວິໄສທັດກ້າວໄກທີ່ສຸດບາງຄົນໃນຍຸກຂອງພວກເຮົາ.

ສິ່ງທີ່ຜູ້ຊະນະຈະໄດ້ຮັບ

ການຊະນະ GRANSHAN Bloom Award ມີຄວາມໝາຍຫຼາຍກວ່າການໄດ້ຮັບການຍົກຍ້ອງ. ມັນໝາຍເຖິງການທີ່ຜົນງານຂອງທ່ານກາຍເປັນສ່ວນໜຶ່ງຂອງການສົນທະນາລະດັບໂລກກ່ຽວກັບການຈັດວາງຕົວອັກສອນ ແລະ ການອອກແບບ – ໄດ້ຮັບການເຫັນ, ການຍົກຍ້ອງ ແລະ ການຈົດຈຳ. ການຍອມຮັບທຸກຮູບແບບຖືກອອກແບບມາເພື່ອໃຫ້ໂຄງການຂອງທ່ານເປັນທີ່ຮູ້ຈັກ, ມີບໍລິບົດ ແລະ ມີຕົວຕົນຢ່າງຍືນຍົງ.

Bloom Award
ທຸກຜົນງານທີ່ສົ່ງແລ້ວໄດ້ຮັບລາງວັນ ຈະໄດ້ຮັບ **GRANSHAN Bloom Award** – ເຄື່ອງໝາຍແຫ່ງຄວາມສຳເລັດທີ່ຜູ້ຊະນະສາມາດນຳໄປໃຊ້ສະແດງຄວາມສຳເລັດຂອງຕົນ. ນອກຈາກໃບຮັບຮອງ ຜູ້ຊະນະຈະໄດ້ຮັບສື່ທາງການເພື່ອຊ່ວຍເຜີຍແຜ່ການຍອມຮັບທີ່ຕົນໄດ້ຮັບ – ເຊັ່ນ ໃນສື່ສັງຄົມ, ແຟ້ມຜົນງານ ຫຼື ການສື່ສານກັບສື່ມວນຊົນ.

ການຍອມຮັບລະດັບໂລກ
ໂຄງການທີ່ຊະນະຈະ ໄດ້ຮັບການນຳສະເໜີເປັນຈຸດເດັ່ນຜ່ານຊ່ອງທາງຂອງ **GRANSHAN** ແລະ ຄູ່ຮ່ວມສື່ຂອງພວກເຮົາ ເຂົ້າເຖິງຊຸມຊົນການອອກແບບສາກົນ ແລະ ກວ້າງໄກກວ່ານັ້ນ. ໃນເຄືອຂ່າຍວິຊາຊີບ ຜົນງານຂອງທ່ານຈະເປັນທີ່ຮູ້ຈັກໃນໝູ່ນັກອອກແບບ, ລູກຄ້າ, ນັກການສຶກສາ ແລະ ສະຖາບັນວັດທະນະທຳທົ່ວໂລກ.

ນິທັດສະການອອນລາຍ ແລະ ຄັງເກັບ
ທຸກຜົນງານທີ່ສົ່ງແລ້ວຊະນະລາງວັນຈະຖືກນຳສະເໜີໃນ ການສະແດງຜົນງານອອນລາຍທີ່ຄັດສັນແລ້ວ ຢູ່ granshan.com. ຫຼັງຈາກເປີດຕົວ ແຕ່ລະໂຄງການຈະກາຍເປັນສ່ວນໜຶ່ງຂອງ ຄັງເກັບອອນລາຍຖາວອນຂອງ **GRANSHAN** – ເປັນບັນທຶກທີ່ຄົ້ງຢູ່ຍາວນານ ແລະ ສາທາລະນະເຂົ້າເຖິງໄດ້ ເພື່ອການອ້າງອີງ, ການຄົ້ນຄວ້າ ແລະ ແຮງບັນດານໃຈ.

ການຍອມຮັບຜ່ານສື່ພິມ
ຜູ້ຊະນະທຸກຄົນຈະຖືກລວມໄວ້ ໃນສື່ສິ່ງພິມທາງການຂອງ **GRANSHAN**. ສຳລັບ *Best of the Best* ສື່ນິຈະຖືກສົ່ງໃຫ້ໂດຍກົງ; ຜູ້ຊະນະອື່ນໆສາມາດຂໍຮັບໄດ້ (ໂດຍຮັບຜິດຊອບຄ່າຈັດສົ່ງ) ຫຼື ຮັບດ້ວຍຕົນເອງໃນນິທັດສະການ ແລະ ກອງປະຊຸມ

GRANSHAN. ສ່ວນ**ພິມ**ເຫຼົ່ານີ້ເປັນ**ຫຼາຍ**ກວ່າ**ປຶ້ມ**ລາຍ**ການ** ເພາະ**ເປັນ**ຫຼັກ**ຖານ**ທີ່**ຈັບ**ຕ້ອງ**ໄດ້**ຂອງ**ຄວາມ**ເປັນ**ເລີດ**ດ້ານ**ຕ່ໍ**ວ**ອັ**ກ**ສອນ.

ການເປີດ**ຕ່ໍ**ວ**ລາ**ງ**ວັນ** ແລະ **ນິ**ທ**ັ**ດ**ສ**ະ**ການ**ຫຼັ**ກ**
Best of the Best **ຈ**ະ**ຖ**ືກ**ເ**ປີ**ດ**ເ**ຜີ**ຍ**ໃ**ນ **ພິ**ທ**ີ**ມ**ອ**ບ **GRANSHAN Bloom Award** **ເ**ຊ**ິ**ງ**ເ**ປ**ັ**ນ**ສ**ວ**ນ**ໜ**ຶ**ງ**ຂ**ອ**ງ**ກ**ອ**ງ**ປ**ະ**ຊ**ຸ**ມ**ທ**ີ**ອ**ຸ**ທ**ິ**ດ **ໃ**ຫ**ໍ**ແ**ກ**ໍ**ການ**ຈ**ັ**ດ**ວ**າ**ງ**ຕ**ໍ**ວ**ອ**ັ**ກ**ສ**ອ**ນ, **ວ**ັ**ດ**ທ**ະ**ນ**ະ**ທ**ໍ**າ** **ແ**ລ**ະ** **ກ**ານ**ອ**ອ**ກ**ແ**ບ**ບ. **ຄ**ຽ**ງ**ຄ**ູ**ໍ**ກ**ັ**ບ**ງ**ານ**ນ**ີ **ນ**ິ**ທ**ັ**ດ**ສ**ະ**ກ**ານ**ທ**ີ**ຄ**ັ**ດ**ສ**ັ**ນ**ແ**ລ**ວ**ຈ**ະ**ໃ**ຫ**ໍ** **ຜ**ູ**ໍ**ຊ**ິ**ມ**ສ**ໍ**າ**ຜ**ັ**ດ**ພ**ະ**ລ**ັ**ງ**ຂ**ອ**ງ**ແ**ຕ**ໍ**ລ**ະ**ຜ**ົ**ນ**ງ**ານ**ທ**ີ**ຄ**ັ**ດ**ເ**ລ**ືອ**ກ**ຢ**ໍ**າ**ງ**ເ**ຕ**ັ**ມ**ທ**ີ**.

ນິ**ທ**ັ**ດ**ສ**ະ**ກ**ານ**ພ**າ**ກ**ພ**ື**ນ** **ແ**ລ**ະ** **ຄ**ູ**ໍ**ຮ**ໍ**ວ**ມ**ງ**ານ**
ຫຼ**ັ**ງ**ຈ**າ**ກ**ກ**ານ**ເ**ປ**ີ**ດ**ຕ**ໍ**ວ**ລ**າ**ງ**ວ**ັ**ນ** **ແ**ລ**ະ** **ນ**ິ**ທ**ັ**ດ**ສ**ະ**ກ**ານ**ຫ**ຼ**ັ**ກ** **ຜ**ົ**ນ**ງ**ານ**ທ**ີ**ຄ**ັ**ດ**ເ**ລ**ືອ**ກ**ຈ**ະ**ຖ**ືກ**ນ**ໍ**າ**ສ**ະ**ເ**ໜ**ີ**ຜ**ໍ**ານ**ເ**ຄ**ືອ**ຂ**ໍ**າ**ຍ**ຄ**ູ**ໍ**ຮ**ໍ**ວ**ມ**ງ**ານ** **ສ**າ**ກ**ົ**ນ**ຂ**ອ**ງ GRANSHAN – **ລ**ວ**ມ**ເ**ຖ**ິ**ງ**ນ**ິ**ທ**ັ**ດ**ສ**ະ**ກ**ານ**ພ**າ**ກ**ພ**ື**ນ**ທ**ີ**ອ**າ**ດ**ຈ**ັ**ດ**ຂ**ຶ**ນ**ພ**ັ**ອ**ມ**ກ**ັ**ນ**ໃ**ນ**ສ**ວ**ນ**ຕ**ໍ**າ**ງ**ໆ**ຂ**ອ**ງ**ໂ**ລ**ກ.

ຜູ**ໍ**ສ**້**ງ**ຜ**ົ**ນ**ງ**ານ**ທ**ຸ**ກ**ຄ**ົ**ນ**ຕ**ໍ**ອ**ງ**ສ**ະ**ໜ**ອ**ງ**ພ**າ**ບ **ຫ**ຼ**ື** **ສ**ໍ**າ**ເ**ນ**ົ**າ**ຜ**ົ**ນ**ງ**ານ**ທ**ີ**ພ**ັ**ອ**ມ**ພ**ິ**ມ**ຢ**ໍ**າ**ງ**ໜ**ັ**ອ**ຍ**ໜ**ຶ**ງ**ລ**າ**ຍ**ກ**ານ**ໃ**ນ**ເ**ວ**ລ**າ**ສ**້**ງ**ຜ**ົ**ນ**ງ**ານ **ເ**ພ**ື**ອ** **ໃ**ຫ**ໍ**ສ**າ**ມ**າ**ດ**ລ**ວ**ມ**ເ**ຂ**ົ**ໍ**າ**ໃ**ນ**ນ**ິ**ທ**ັ**ດ**ສ**ະ**ກ**ານ** **ແ**ລ**ະ** **ສ**້**ງ**ພ**ິ**ມ**ໄ**ດ**ໍ.

ປ**ະ**ເ**ພ**ດ** **ແ**ລ**ະ** **ຄ**ໍ**າ**ສ**ະ**ໝ**ັ**ກ

GRANSHAN Bloom Award **ສ**ໍ**າ**ງ**ຂ**ຶ**ນ**ໂ**ດ**ຍ**ຊ**ຸ**ມ**ຊ**ົ**ນ **ເ**ພ**ື**ອ**ຊ**ຸ**ມ**ຊ**ົ**ນ.

ພວ**ກ**ເ**ຮ**ົ**ໍ**າ**ມ**ຸ**ງ**ໃ**ຫ**ໍ**ນ**ັ**ກ**ອ**ອ**ກ**ແ**ບ**ບ **ແ**ລ**ະ** **ອ**ິ**ງ**ກ**ອ**ນ**ທ**ຸ**ກ**ຂ**ະ**ໜ**າ**ດ **ຈ**າ**ກ**ທ**ຸ**ກ**ບ**ໍ**ລ**ິ**ບ**ິ**ດ**ເ**ສ**ດ**ຖ**ະ**ກ**ິ**ດ **ສ**າ**ມ**າ**ດ**ເ**ຂ**ົ**ໍ**າ**ຮ**ໍ**ວ**ມ**ໄ**ດ**ໍ້ – **ພ**ັ**ອ**ມ**ທ**ັ**ງ**ໃ**ຫ**ໍ** **ພ**ວ**ກ**ເ**ຮ**ົ**ໍ**າ**ສ**າ**ມ**າ**ດ**ຈ**ັ**ດ**ກ**ານ**ປ**ະ**ກ**ວ**ດ, **ດ**ໍ**າ**ເ**ນ**ີ**ນ**ຂ**ະ**ບ**ວ**ນ**ກ**ານ**ຕ**ັ**ດ**ສ**ິ**ນ **ແ**ລ**ະ** **ຍ**ົ**ກ**ຍ**ໍ**ອ**ງ**ຜ**ູ**ໍ**ຊ**ະ**ນ**ະ**ໄ**ດ**ໍ້**ຢ**ໍ**າ**ງ**ມ**ີ**ຄ**ວ**າ**ມ**ໝ**າ**ຍ.

ເພ**ື**ອ**ໃ**ຫ**ໍ**ຂ**ະ**ບ**ວ**ນ**ກ**ານ**ມ**ີ**ຄ**ວ**າ**ມ**ເ**ປ**ັ**ນ**ທ**ໍ**າ **ພ**ວ**ກ**ເ**ຮ**ົ**ໍ**າ**ມ**ີ**ລ**ະ**ດ**ັ**ບ**ຄ**ໍ**າ**ສ**ະ**ໝ**ັ**ກ**ສ**າ**ມ**ລ**ະ**ດ**ັ**ບ **ໂ**ດ**ຍ**ອ**ີ**ງ**ໃ**ສ**ໍ**ກ**ານ**ປ**ະ**ເ**ມ**ີ**ນ**ຕ**ົ**ນ**ເ**ອ**ງ:

- **ຜ**ູ**ໍ**ມ**ີ**ລ**າ**ຍ**ໄ**ດ**ໍ້**ຕ**ໍ**ໍ**າ** **/** **ນ**ັ**ກ**ສ**ຶ**ກ**ສ**າ** **/** **ຜ**ູ**ໍ**ຝ**ຶ**ກ**ງ**ານ** **/** **ຜ**ູ**ໍ**ເ**ຮ**ັ**ດ**ວ**ຽ**ກ**ອ**ິ**ດ**ສ**ະ**ຫ**ຼ**ະ** – **ສ**ໍ**າ**ລ**ັ**ບ**ບ**ຸ**ກ**ຄ**ົ**ນ, **ນ**ັ**ກ**ສ**ຶ**ກ**ສ**າ** **ແ**ລ**ະ** **ນ**ັ**ກ**ອ**ອ**ກ**ແ**ບ**ບ **ອ**ິ**ດ**ສ**ະ**ຫ**ຼ**ະ**ທ**ີ**ມ**ີ**ຊ**ັ**ບ**ພ**ະ**ຍ**າ**ກ**ອ**ນ**ຈ**ໍ**າ**ກ**ັ**ດ.
- **ບ**ໍ**ລ**ິ**ສ**ັ**ດ**ຂ**ະ**ໜ**າ**ດ**ນ**ັ**ອ**ຍ** **ແ**ລ**ະ** **ກ**າ**ງ** – **ສ**ໍ**າ**ລ**ັ**ບ**ສ**ະ**ຕ**ູ**ດ**ິ**ໂ**ອ** **ແ**ລ**ະ** **ເ**ອ**ເ**ຈ**ນ**ຊ**ີ**ທ**ີ**ມ**ີ**ທ**ີ**ມ**ງ**ານ** **ແ**ລ**ະ** **ລ**າ**ຍ**ຮ**ັ**ບ**ບ**ໍ**ສ**ູ**ງ.
- **ບ**ໍ**ລ**ິ**ສ**ັ**ດ**ຂ**ະ**ໜ**າ**ດ**ໃ**ຫ**ຍ**ໍ** – **ສ**ໍ**າ**ລ**ັ**ບ**ເ**ອ**ເ**ຈ**ນ**ຊ**ີ, **ບ**ໍ**ລ**ິ**ສ**ັ**ດ** **ຫ**ຼ**ື** **ສ**ະ**ຖ**າ**ບ**ັ**ນ**ທ**ີ**ມ**ີ**ພ**ື**ນ**ຖ**ານ**ໝ**ັ**ນ**ຄ**ົ**ງ **ແ**ລ**ະ** **ມ**ີ**ຂ**ີ**ດ**ຄ**ວ**າ**ມ**ສ**າ**ມ**າ**ດ**ດ**ໍ**ານ**ອ**ິ**ງ** **ກ**ອ**ນ**ສ**ູ**ງ**ກ**ວ**ໍ**າ.

ພວ**ກ**ເ**ຮ**ົ**ໍ**າ**ໄ**ວ**ໍ**ວ**າ**ງ**ໃ**ຈ**ໃ**ຫ**ໍ**ຜ**ູ**ໍ**ສ**້**ງ**ຜ**ົ**ນ**ງ**ານ**ແ**ຕ**ໍ**ລ**ະ**ຄ**ົ**ນ**ເ**ລ**ືອ**ກ**ປ**ະ**ເ**ພ**ດ**ທ**ີ**ສ**ະ**ທ**ໍ**ອ**ນ**ສ**ະ**ຖ**ານ**ະ**ຂ**ອ**ງ**ຕ**ົ**ນ**ໄ**ດ**ໍ້**ດ**ີ**ທ**ີ**ສ**ຸ**ດ. **ຄ**ໍ**າ**ສ**ະ**ໝ**ັ**ກ**ຈ**ະ**ຄ**ົ**ງ** **ເ**ຕ**ີ**ມ**ຈ**ົ**ນ**ສ**ິ**ນ**ສ**ຸ**ດ**ກ**ານ**ຮ**ັ**ບ**ຜ**ົ**ນ**ງ**ານ – **ບ**ໍ**ແ**ບ**ງ**ເ**ປ**ັ**ນ**ໄ**ລ**ຍ**ະ, **ບ**ໍ**ຂ**ຶ**ນ**ລ**າ**ຄ**າ – **ແ**ລ**ະ** **ປ**ະ**ເ**ພ**ດ**ແ**ຄ**ມ**ເ**ປ**ນ **ແ**ລ**ະ** **ອ**ັ**ດ**ຕ**ະ**ລ**ັ**ກ**ທ**າ**ງ**ສ**າ**ຍ**ຕ**າ **ແ**ລ**ະ** **ກ**ານ**ສ**້**ງ**ແ**ບ**ບ**ຣ**ນ **ມ**ີ**ຄ**ໍ**າ**ສ**ະ**ໝ**ັ**ກ**ເ**ປ**ັ**ນ**ສ**ອ**ງ**ເ**ທ**ົ**ໍ**າ**ຂ**ອ**ງ**ປ**ະ**ເ**ພ**ດ**ອ**ື**ນ. **ຄ**ໍ**າ**ສ**ະ**ໝ**ັ**ກ**ແ**ມ**ນ**ຄ**ໍ**າ**ໃ**ຊ**ໍ**ຈ**ໍ**າ**ຍ**ພ**ຽ**ງ**ຢ**ໍ**າ**ງ**ດ**ຽ**ວ**ທ**ີ**ຕ**ໍ**ອ**ງ** **ຊ**ໍ**າ**ລ**ະ: **ບ**ໍ**ມ**ີ**ຄ**ໍ**າ**ທ**ໍ**ານ**ຽ**ມ**ສ**ໍ**າ**ລ**ັ**ບ**ຜ**ູ**ໍ**ຊ**ະ**ນ**ະ, **ບ**ໍ**ມ**ີ**ຄ**ໍ**າ**ໃ**ຊ**ໍ**ຈ**ໍ**າ**ຍ**ແ**ອ**ບ**ແ**ຝ**ງ.

ຄໍ**າ**ສ**ະ**ໝ**ັ**ກ**ຄ**ິ**ດ**ຕ**ໍ**ໍ**ກ**ານ**ສ**້**ງ**ຜ**ົ**ນ**ງ**ານ **ແ**ລ**ະ** **ຕ**ໍ**ໍ**ປ**ະ**ເ**ພ**ດ**ສ**ີ – **ຖ**ໍ**າ**ໂ**ຄ**ງ**ກ**ານ**ໜ**ຶ**ງ**ຖ**ືກ**ສ**້**ງ**ໃ**ນ**ຫ**ຼ**າ**ຍ**ກ**ວ**ໍ**າ**ໜ**ຶ**ງ**ປ**ະ**ເ**ພ**ດ **ຈ**ະ**ປ**ະ**ເ**ມ**ີ**ນ **(**ແ**ລ**ະ** **ຊ**ໍ**າ**ລ**ະ**ຄ**ໍ**າ**ສ**ະ**ໝ**ັ**ກ**) **ແ**ຍ**ກ**ກ**ັ**ນ**ສ**ໍ**າ**ລ**ັ**ບ**ແ**ຕ**ໍ**ລ**ະ**ຜ**ົ**ນ**ງ**ານ**ທ**ີ**ສ**້**ງ. **ຂ**ໍ**ຍ**ົ**ກ**ເ**ວ**ັ**ນ**ພ**ຽ**ງ**ຢ**ໍ**າ**ງ**ດ**ຽ**ວ**ແ**ມ**ນ**ສ**ິ**ດ**ສ**້**ງ**ຜ**ົ**ນ**ງ**ານ**ເ**ພ**ີ**ມ**ອ**ີ**ກ**ໜ**ຶ**ງ**ຜ**ົ**ນ**ງ**ານ **ໂ**ດ**ຍ**ບ**ໍ**ເ**ສ**ຍ**ຄ**ໍ**າ **ສ**ໍ**າ**ລ**ັ**ບ**ຜ**ົ**ນ**ງ**ານ**ທ**ີ**ສ**້**ງ**ກ**ໍ**ອ**ນ 27 ຕ**ຸ**ລ**າ 2026.

ສ້**ງ**ຜ**ົ**ນ**ງ**ານ**ແ**ລ**ວ**ບ**ໍ**? **ຜ**ົ**ນ**ງ**ານ**ທ**ີ**ຫ**ໍ**ໍ**າ**ນ**ສ**້**ງ**ຍ**ັ**ງ**ຄ**ົ**ງ**ຢ**ູ**ຕ**າ**ມ**ເ**ຕ**ີ**ມ**ທ**ຸ**ກ**ປ**ະ**ກ**ານ. **ຜ**ົ**ນ**ງ**ານ**ທ**ີ**ສ**້**ງ**ກ**ໍ**ອ**ນ 27 ຕ**ຸ**ລ**າ 2026 **ສ**າ**ມ**າ**ດ**ແ**ກ**ໍ**ໄ**ຂ **ຫ**ຼ**ື** **ເ**ພ**ີ**ມ**ເ**ຕ**ີ**ມ**ໃ**ຫ**ໍ**ຄ**ົ**ບ**ຖ**ວ**ນ**ໄ**ດ**ໍ້**ໂ**ດ**ຍ**ບ**ໍ**ເ**ສ**ຍ**ຄ**ໍ**າ **ຈ**ົ**ນ**ເ**ຖ**ິ**ງ 22 **ທ**ັ**ນ**ວ**າ 2026. **ເ**ນ**ື**ອ**ງ**ຈ**າ**ກ**ຄ**ໍ**າ**ສ**ະ**ໝ**ັ**ກ**ປ**ັ**ດ**ຈ**ຸ**ບ**ັ**ນ**ຫ**ຼ**ຸ**ດ**ລ**ົ**ງ **ທ**ໍ**ານ**ຍ**ັ**ງ**ໄ**ດ**ໍ້**ຮ**ັ**ບ**ສ**ິ**ດ

ສົ່ງຜົນງານເພີ່ມອີກໜຶ່ງຜົນງານໂດຍບໍ່ເສຍຄ່າ; ພວກເຮົາຈະຕິດຕໍ່ທ່ານໂດຍກົງ.

ປະເພດ	ຜູ້ມີລາຍໄດ້ຕ່ຳ, ນັກສຶກສາ ແລະ ຜູ້ເຮັດວຽກອິດສະຫຼະ	ບໍລິສັດຂະໜາດນ້ອຍ ແລະ ກາງ	ບໍລິສັດຂະໜາດໃຫຍ່
1. ການອອກແບບບັນນາທິການ ແລະ ການພິມ	15€	45€	125€
2. ໂປສເຕີ (ສິ່ງພິມ ແລະ ດິຈິຕອນ)	15€	45€	125€
3. ການອອກແບບບັນຈຸພັນ	15€	45€	125€
4. ສື່ດິຈິຕອນ ແລະ ການອອກແບບສ່ວນຕິດຕໍ່ຜູ້ໃຊ້	15€	45€	125€
5. ກຣາຟິກເຄື່ອນໄຫວ ແລະ ພາບເຄື່ອນໄຫວ	15€	45€	125€
6. ການອອກແບບພື້ນທີ່ ແລະ ປະສົບການ	15€	45€	125€
7. ແຄມເປນ	30€	90€	250€
8. ອັດຕະລັກທາງສາຍຕາ ແລະ ການສ້າງແບຣນ	30€	90€	250€
9. ຜົນງານທົດລອງ, ຍັງບໍ່ເຜີຍແຜ່ ແລະ ສິລະປະການຂຽນອັກສອນ	15€	45€	125€

ກຳນົດການສົ່ງຜົນງານ ແລະ ຂະບວນການຕັດສິນ

GRANSHAN Bloom Award ດຳເນີນໄປຕາມຂັ້ນຕອນທີ່ຊັດເຈນ – ເພື່ອໃຫ້ທ່ານມີເວລາພຽງພໍໃນການກະກຽມຜົນງານທີ່ດີທີ່ສຸດ ແລະ ຮັບປະກັນການປະເມີນທີ່ເປັນທຳ ແລະ ຮອບຄອບ.

ໄລຍະການສົ່ງຜົນງານ

- ເປີດຮັບຜົນງານ: ທັນວາ **2025**
- ຄ່າສະໝັກຫຼຸດລົງສຳລັບທຸກຄົນ ຕັ້ງແຕ່ **27** ຕຸລາ **2026** ແລະ ຄົງເດີມຈົນສິ້ນສຸດການຮັບຜົນງານ – ບໍ່ແບ່ງເປັນໄລຍະ, ບໍ່ຂຶ້ນລາຄາ
- ປິດຮັບຜົນງານ: **22** ທັນວາ **2026 (**ທຸກບ່ອນໃນໂລກ, **AoE) –** ເປັນວັນສຸດທ້າຍ ບໍ່ມີການຂະຫຍາຍເວລາອີກ

ຫຼັງປັດຮັບຜົນງານ

- **ການຈັດການ:** ທັນວາ 2026 – ກະກຽມທຸກຜົນງານທີ່ສົ່ງໃຫ້ພ້ອມສຳລັບການພິຈາລະນາຂອງຄະນະກຳມະການ.
- **ການປະເມີນ ແລະ ການຄັດເລືອກສຸດທ້າຍ:** ມັງກອນ – ເມສາ 2027 – ກຸ່ມອັກສອນ ແລະ ຄະນະກຳມະການຜູ້ຊ່ຽວຊານຂອງແຕ່ລະກຸ່ມ ປະເມີນຜົນງານທີ່ສົ່ງແຕ່ລະຜົນງານໃນມັງກອນ ຕາມດ້ວຍການຫາລືໂດຍມີຜູ້ດຳເນີນໃນ ກຸມພາ ແລະ ການຕັດສິນໃນມີນາ; 50 Best of the Best Jury **ຄັດເລືອກ**ໃນເມສາ.
- **ປະກາດຜູ້ຊະນະ:** ລະດູໃບໄມ້ປົ່ງ 2027 – ເປີດເຜີຍຜູ້ຊະນະເທິງເວທີໃນງານ GRANSHAN Conference & Ceremony (**ຈະແຈ້ງສະຖານທີ ແລະ ວັນທີພາຍຫຼັງ**).

ຄຳສັນຍາທີ່ພວກເຮົາຮັກສາ: ຜົນງານທີ່ສົ່ງໃນໄລຍະສະໝັກລ່ວງໜ້າທີ່ຜ່ານມາ ເຊິ່ງສິ້ນສຸດໃນ 17 ມີນາ 2026 ແລະ ໄດ້ຮັບລາງວັນໃນພາຍຫຼັງ ຈະໄດ້ຮັບການຍອມຮັບເປັນພິເສດ. ຜູ້ຊະນະຈາກໄລຍະສະໝັກລ່ວງໜ້າເຫຼົ່ານີ້ຈະເປັນກຸ່ມທຳອິດ ທີ່ຖືກນຳສະເໜີໃນການສື່ສານຂອງ GRANSHAN ຫຼັງການປະກວດ ເຮັດໃຫ້ຜົນງານຂອງພວກເຂົາເປັນທີ່ຮູ້ຈັກກ່ອນ ເມື່ອ ປະກາດຜົນຕໍ່ໜ້າໂລກ.

GRANSHAN Supporting Foundries Club

ກຸ່ມຜູ້ຜະລິດແບບຕົວອັກສອນຂະໜາດກາງໄດ້ຮ່ວມກຳລັງກັນຊ່ວຍຄິດວາງແນວທາງ ແລະ ເປີດຕົວ GRANSHAN Bloom Award – ໂດຍມີສ່ວນຮ່ວມທັງດ້ານການເງິນ ແລະ ຍຸດທະສາດ. ພວກເຂົາໄດ້ສະໜັບສະໜຸນແນວຄິດລວມຂອງການ ປະກວດ ແລະ ປັດຈຸບັນມີບົດບາດຢ່າງຫ້າວຫັນໃນການຂະຫຍາຍການເຂົ້າເຖິງຜ່ານຊ່ອງທາງຂອງຕົນ.

ຜູ້ຜະລິດແບບຕົວອັກສອນທີ່ສະໜັບສະໜຸນ (https://next.granshan.com/supporting-foundries) **ແຕ່ລະລາຍຈະ** ມອບການຍົກຍ້ອງພິເສດດ້ວຍ: ເລືອກໜຶ່ງໂຄງການທີ່ຊະນະ ເຊິ່ງໃຊ້ແບບຕົວອັກສອນຂອງຕົນ ແລະ ນຳສະເໜີເປັນຈຸດເດັ່ນ ໃນການສະແດງຜົນງານສະເພາະ ໃນແພລັດຟອມຂອງຕົນ, ຜ່ານ GRANSHAN ແລະ ໃນສື່ສັງຄົມ.

ການມີສ່ວນຮ່ວມຂອງພວກເຂົາແມ່ນເພື່ອສະໜັບສະໜຸນເທົ່ານັ້ນ – ພວກເຂົາບໍ່ມີສ່ວນໃນຂະບວນການຕັດສິນ. ບົດບາດ ຂອງພວກເຂົາແມ່ນການເສີມສ້າງພື້ນຖານຂອງການປະກວດ, ສະໜັບສະໜຸນການສື່ສານ ແລະ ຍົກຍ້ອງຜູ້ຊະນະທົ່ວໂລກ. ຄວາມເຊື່ອມໂຍງພິເສດນີ້ຈະປາກົດໃນ ການສະແດງຜົນງານ **Supporting Foundry Choice** ໂດຍສະເພາະ – ເປັນ ລາງວັນທີ່ມີເອກະລັກ ເພື່ອສ່ອງແສງໃຫ້ຜົນງານທີ່ໃຊ້ແບບຕົວອັກສອນຂອງຜູ້ຜະລິດໄດ້ຢ່າງໂດດເດັ່ນ.

ລະບົບສົ່ງຜົນງານ ແລະ ຮູບແບບຕາມປະເພດສື

ຜົນງານທີ່ສົ່ງເຂົ້າ GRANSHAN Bloom Award **ທັງໝົດຕ້ອງສົ່ງຜ່ານ ລະບົບສົ່ງຜົນງານ ສະເພາະຂອງພວກເຮົາ ເຊິ່ງ** ພັດທະນາຮ່ວມກັບຜູ້ຊ່ຽວຊານແພລັດຟອມການປະກວດ. ລະບົບນີ້ໃຫ້ທ່ານອັບໂຫຼດຜົນງານໃນຮູບແບບດິຈິຕອນທີ່ກຳນົດ ແລະ ນຳທ່ານໄປຕາມຂະບວນການທີ່ລະຂັ້ນ. ຜົນງານທີ່ທ່ານກຳລັງກະກຽມຈະຖືກບັນທຶກໄປເລື້ອຍໆ ຈຶ່ງສາມາດແກ້ໄຂ ແລະ ປັບປຸງໄດ້ບໍ່ຈຳກັດຄັ້ງກ່ອນຊຳລະເງິນ – ທ່ານສາມາດເລີ່ມກ່ອນ ແລະ ຄ່ອຍໆປັບປຸງໄດ້. ການຊຳລະຄ່າສະໝັກແມ່ນ ການຢືນຢັນສົ່ງຜົນງານ; ເມື່ອຊຳລະແລ້ວ ຜົນງານຈະຖືກລັອກ ແລະ ບໍ່ສາມາດແກ້ໄຂ ຫຼື ຍົກເລີກໄດ້ອີກ. ຜົນງານທີ່ສົ່ງກ່ອນ 27 ຕຸລາ 2026 ສາມາດແກ້ໄຂ ຫຼື ເພີ່ມເຕີມໃຫ້ຄົບຖ້ວນໄດ້ໂດຍບໍ່ເສຍຄ່າ ຈົນເຖິງ 22 ທັນວາ 2026.

ສຳລັບຜົນງານທີ່ເປັນວັດຖຸ ຫຼື ສິ່ງພິມ ການບັນທຶກຜົນງານແບບດິຈິຕອນທີ່ມີຄຸນນະພາບສູງແມ່ນສິ່ງຈຳເປັນ – ເຊັ່ນ ຮູບຖ່າຍ, ພາບສະແກນ ຫຼື ວິດີໂອບັນທຶກທີ່ນຳສະເໜີຜົນງານຢ່າງຊັດເຈນ. ຕົວຢ່າງ ວາລະສານສາມາດອັບໂຫຼດໄດ້ທັງເປັນ PDF ທີ່ເປີດອ່ານໄດ້ ແລະ ວິດີໂອສັ້ນທີ່ສະແດງການພິກໜ້າ ພ້ອມກັບພາບແຕ່ລະໜ້າທີ່ມີຄວາມລະອຽດສູງ ເພື່ອສະແດງລາຍລະອຽດດ້ານຕົວອັກສອນ.

ລະບົບສົ່ງຜົນງານຖືກອອກແບບໃຫ້ລວບລວມທັງໄຟລ໌ໂຄງການຂອງທ່ານ ແລະ ຂໍ້ມູນທີ່ຈຳເປັນສຳລັບການປະເມີນຂອງຄະນະກຳມະການ ແລະ ຖ້າໄດ້ຮັບລາງວັນ ກໍສາມາດນຳໄປໃຊ້ໄດ້ທັນທີໃນ ນິທັດສະການອອນລາຍ, ປຶ້ມລາຍການສິ່ງພິມ ແລະ ການຈັດສະແດງທາງການຍະພາບຂອງພວກເຮົາ. ທ່ານຈະຕ້ອງສະໜອງ:

- ຂໍ້ມູນຜູ້ສົ່ງຜົນງານ ແລະ ຂໍ້ມູນຕິດຕໍ່
- ຮູບພາບ (jpg, png), PDF, ວິດີໂອ
- ຄຳອະທິບາຍໂຄງການຢ່າງກະຊັບ
- ລາຍຊື່ຜູ້ມີສ່ວນຮ່ວມທັງໝົດ ພ້ອມຮູບບຸກຄົນ ແລະ ປະຫວັດຫຍໍ້ຂອງແຕ່ລະຄົນ

ຄວນກະກຽມສື່ທັງໝົດໃຫ້ພ້ອມ ເພື່ອວ່າຫາກຜົນງານຂອງທ່ານໄດ້ຮັບລາງວັນ ຈະສາມາດນຳໄປໃຊ້ສຳລັບການສາຍພາບດິຈິຕອນ, ການພິມຂະໜາດໃຫຍ່ ຫຼື ການນຳສະເໜີອອນລາຍໄດ້ໂດຍບໍ່ຕ້ອງແກ້ໄຂເພີ່ມເຕີມ. ຄະນະກຳມະການຈະໃຊ້ແພລັດຟອມດຽວກັນນີ້ໃນການພິຈາລະນາ ແລະ ປະເມີນຜົນງານຂອງທ່ານໃນຂັ້ນຕອນການປະເມີນໂດຍຄະນະກຳມະການຜູ້ຊ່ຽວຊານ. ກະລຸນາຊາບວ່າ: ຜົນງານທີ່ສົ່ງຈະຖືກສົ່ງຕໍ່ໃຫ້ຄະນະກຳມະການກໍຕໍ່ເມື່ອຊຳລະຄ່າສະໝັກແລ້ວເທົ່ານັ້ນ.

ເພື່ອໃຫ້ການປະເມີນເປັນທຳ ທຸກໂຄງການຈະຖືກນຳສະເໜີຕໍ່ຄະນະກຳມະການໂດຍບໍ່ລະບຸຕົວຕົນ. ຂໍ້ຄວາມອະທິບາຍທີ່ປ້ອນໃນແບບຟອມສະໝັກຈະປະກອບກັບຜົນງານ ແຕ່ຕ້ອງບໍ່ມີຂໍ້ມູນທີ່ເປີດເຜີຍຕົວຕົນຂອງຜູ້ສົ່ງຜົນງານ. ເມື່ອເປັນໄປໄດ້ ຄວນລວມສື່ພາບເຄື່ອນໄຫວ ຫຼື ສື່ທີ່ມີການເຄື່ອນໄຫວ (ວິດີໂອ, GIF ຫຼື ຮູບແບບທຽບເທົ່າ) ໃນການສົ່ງຜົນງານ ເພື່ອໃຫ້ຄະນະກຳມະການສຳຜັດຜົນງານໃນຮູບແບບເຄື່ອນໄຫວຕາມທີ່ຕັ້ງໃຈໄວ້.

1. ການອອກແບບບັນນາທິການ ແລະ ການພິມ

ຂັ້ນຕອນທີ 1 – ການສົ່ງຜົນງານດິຈິຕອນ

- PDF ຄວາມລະອຽດສູງ (300 dpi, ສູງສຸດ 20 MB) ທີ່ສະແດງສິ່ງພິມຢ່າງຄົບຖ້ວນ – ລວມເຖິງໜ້າປົກ, ໜ້າຄູ່ທີ່ຄັດເລືອກ ແລະ ລາຍລະອຽດສຳຄັນດ້ານຕົວອັກສອນ.
- ຊຸດຮູບຖ່າຍຄຸນນະພາບສູງ (JPEG, 300 dpi) ທີ່ສະແດງ:
  - ສິ່ງພິມໃນຖານະວັດຖຸຕົວຈິງ (ດ້ານໜ້າ, ດ້ານຫຼັງ, ສັນປຶ້ມ, ສິ່ງອ້າງອີງຂະໜາດ)
  - ໜ້າດ່ຽວ ແລະ ໜ້າຄູ່ ເພື່ອສະແດງການຈັດອົງປະກອບໂດຍລວມ
  - ພາບຖ່າຍໄລຍະໃກ້ຂອງອົງປະກອບສຳຄັນດ້ານຕົວອັກສອນ
- ສິ່ງເພີ່ມໄດ້ຕາມສະໝັກໃຈ: ວິດີໂອສັ້ນ (≤2 ນາທີ, MP4) ທີ່ສະແດງການເປີດອ່ານສິ່ງພິມ.

ຂັ້ນຕອນທີ 2 – ຫຼັງຜ່ານການຄັດເລືອກ – ການສົ່ງຜົນງານຕົວຈິງ

- ສິ່ງສຳເນົາທີ່ພ້ອມພິມຂອງແຕ່ລະຜົນງານຈຳນວນໜຶ່ງຊຸດ ໄປຍັງທີ່ຢູ່ປະຈຳພາກພື້ນທີ່ກຳນົດ (ຈະແຈ້ງລາຍລະອຽດຫຼັງຜ່ານການຄັດເລືອກ). ສຳເນົາເຫຼົ່ານີ້ຈະໃຊ້ໃນການປະເມີນຕົວຈິງ ແລະ ຕໍ່ມາຈະເປັນສ່ວນໜຶ່ງຂອງນິທັດສະການທາງການຍະພາບ.

2. ໂປສເຕີ (ສິ່ງພິມ ແລະ ດິຈິຕອນ)

ການສົ່ງຜົນງານດິຈິຕອນ

- ໄຟລ໌ໂປສເຕີ: JPEG/PNG (300 dpi, ຕາມຂະໜາດພິມສຸດທ້າຍ; ເຊັ່ນ A1/A0 ຫຼື ອັດຕາສ່ວນປ້າຍໂຄສະນາ)
- **ສຳລັບຮູບແບບກາງແຈ້ງ:** ພາບເພີ່ມເຕີມທີ່ສະແດງໂປສເຕີໃນສະພາບແວດລ້ອມຕາມທີ່ຕັ້ງໃຈໄວ້ (ເຊັ່ນ ປ້າຍໂຄສະນາ 18/1 ຢູ່ແຄມຖະໜົນ) ເພື່ອສະແດງຂະໜາດ ແລະ ພະລັງຂອງຜົນງານ.
- **ສຳລັບໂປສເຕີດິຈິຕອນ:** ໄຟລ໌ MP4 (1080p, ≤3 ນາທີ) ຫຼື ລິ້ງໄປຫາການສະແດງທີ່ໃຊ້ງານຈິງ.
- **ສິ່ງເພີ່ມໄດ້ຕາມສະໝັກໃຈ:** PDF ທີ່ມີເຄື່ອງໝາຍຕັດຂອບ ສຳລັບສະບັບພ້ອມພິມ.

3. ການອອກແບບບັນຈຸພັນ

ຂັ້ນຕອນທີ 1 – ການສົ່ງຜົນງານດິຈິຕອນ

- ຊຸດຮູບຖ່າຍ (JPEG, 300 dpi) ທີ່ສະແດງບັນຈຸພັນໃນຖານະວັດຖຸ 3 ມິຕິ ຈາກທຸກມຸມທີ່ກ່ຽວຂ້ອງ.
- **ແບບແຜ່ນຮາບ (ແບບແຜ່ເສັ້ນຕັດ ແລະ ຮອຍພັບ)** ເປັນ PDF ຄວາມລະອຽດສູງ ເພື່ອສະແດງການຈັດວາງຕົວອັກສອນໃນບໍລິບົດ.
- **ສິ່ງເພີ່ມໄດ້ຕາມສະໝັກໃຈ:** ວິດີໂອສັ້ນ (≤2 ນາທີ) ທີ່ສະແດງການໂຕ້ຕອບກັບບັນຈຸພັນ ເຊັ່ນ ການແກະກ່ອງ.

ຂັ້ນຕອນທີ 2 – ຫຼັງຜ່ານການຄັດເລືອກ – ການສົ່ງຜົນງານຕົວຈິງ

- **ສິ່ງສຳເນົາທີ່ພ້ອມພິມຂອງແຕ່ລະຜົນງານຈຳນວນໜຶ່ງຊຸດ ໄປຍັງທີ່ຢູ່ປະຈຳພາກພື້ນທີ່ກຳນົດ (ຈະແຈ້ງລາຍລະອຽດຫຼັງຜ່ານການຄັດເລືອກ). ສຳເນົາເຫຼົ່ານີ້ຈະໃຊ້ໃນການປະເມີນຕົວຈິງ ແລະ ຕໍ່ມາຈະເປັນສ່ວນໜຶ່ງຂອງນິທັດສະການທາງການຍະພາບ.**

4. ສື່ດິຈິຕອນ ແລະ ການອອກແບບສ່ວນຕິດຕໍ່ຜູ້ໃຊ້

- ວິດີໂອນຳຊົມການໃຊ້ງານ (MP4, ≤3 ນາທີ) ທີ່ສະແດງການໂຕ້ຕອບ ແລະ ການນຳທາງ.
- ພາບໜ້າຈໍ (JPEG, 1920×1080 px) ຂອງໜ້າຈໍສຳຄັນ.
- URL ໄປຫາເວັບໄຊ/ແອັບທີ່ໃຊ້ງານຈິງ (ຕ້ອງເຂົ້າເຖິງໄດ້ຈົນກວ່າການຕັດສິນຈະສຳເລັດ).

5. ກຣາຟິກເຄື່ອນໄຫວ ແລະ ພາບເຄື່ອນໄຫວ

- ວິດີໂອຮູບແບບ MP4/MOV (1920 × 1080 px, ≤3 ນາທີ, ≤3 GB)
- **ສິ່ງເພີ່ມໄດ້ຕາມສະໝັກໃຈ:** PDF ສະຕໍຣີບອດ (ບໍ່ເກີນ 4 ໜ້າ)

6. ການອອກແບບພື້ນທີ ແລະ ປະສົບການ

- ຊຸດຮູບຖ່າຍ (JPEG, 300 dpi): ພາບບໍລິບົດ + ພາບລາຍລະອຽດ
- **ສິ່ງເພີ່ມໄດ້ຕາມສະໝັກໃຈ:** ວິດີໂອນຳຊົມ (MP4, ≤2 ນາທີ)

- ແຜນຜັງພື້ນທີ / ແບບການຈັດວາງ (PDF, ໃຊ້ແບບເວັກເຕີເມື່ອເປັນໄປໄດ້)

7. ແຄມເປນ

- ຮູບພາບ (JPEG) ສໍາລັບແຕ່ລະຜົນງານຫຼັກທີ່ນໍາໃຊ້ (ສິ່ງພິມ, ໂປສເຕີ, ໂຄສະນາດິຈິຕອນ)
- ສິ່ງເພີ່ມໄດ້ຕາມສະໝັກໃຈ: ວິດີໂອ (MP4, ≤3 ນາທີ) ທີ່ນໍາສະເໜີການເຜີຍແຜ່ແຄມເປນ
- ລິ້ງໄປຫາແພລັດຟອມແຄມເປນທີ່ໃຊ້ງານຈິງ

8. ອັດຕະລັກທາງສາຍຕາ ແລະ ການສ້າງແບຣນ

- PDF ຊຸດໂລໂກ (ແບບເວັກເຕີ), ຜ້ອມຕົວຢ່າງການໃຊ້ງານ (JPEG)
- ພາບການນໍາໃຊ້ແບຣນ (ເຊັ່ນ ເຄື່ອງຂຽນ, ບັນຈຸພັນ)
- ສິ່ງເພີ່ມໄດ້ຕາມສະໝັກໃຈ: PDF ຄໍາແນະນໍາ (ບໍ່ເກີນ 5 ໜ້າ)

9. ຜົນງານທົດລອງ, ຍັງບໍ່ເຜີຍແຜ່ ແລະ ສິລະປະການຂຽນອັກສອນ

- ແຟ້ມຜົນງານ ຫຼື ເອກະສານບັນທຶກຜົນງານແບບ PDF (ບໍ່ເກີນ 10 ໜ້າ)
- ສິ່ງເພີ່ມໄດ້ຕາມສະໝັກໃຈ: ຕົ້ນແບບດິຈິຕອນ: ວິດີໂອສາທິດ ຫຼື URL
- ສື່ປະກອບແນວຄິດທີ່ກ່ຽວຂ້ອງ (ພາບຮ່າງ, ບັນທຶກການຄົ້ນຄວ້າ)

ກົດລະບຽບການເຂົ້າຮ່ວມ ແລະ ຄຸນຄ່າຮ່ວມ

GRANSHAN Bloom Award ເປັນຫຼາຍກວ່າການປະກວດ – ເປັນພື້ນທີ່ຮ່ວມສໍາລັບຄວາມເປັນເລີດ, ຄວາມເຄົາລົບ ແລະ ການສົນທະນາທາງວັດທະນະທໍາ. ກົດລະບຽບຂອງພວກເຮົາຖືກອອກແບບເພື່ອຮັກສາໃຫ້ພື້ນທີ່ນີ້ເປີດກວ້າງ, ເປັນທໍາ ແລະ ສ້າງແຮງບັນດານໃຈໃຫ້ທຸກຄົນ.

ການເຂົ້າຮ່ວມອີງໃສ່ຄໍາໝັ້ນສັນຍາງ່າຍໆສາມຂໍ້:

- ຫຼັກການຮ່ວມຂອງພວກເຮົາ
  ເມື່ອສົ່ງຜົນງານເຂົ້າປະກວດ ທ່ານຍອມຮັບຖະແຫຼງຄໍາໝັ້ນສັນຍາຂອງ GRANSHAN. ຖະແຫຼງນີ້ສະທ້ອນຄວາມເຊື່ອຂອງພວກເຮົາໃນການອອກແບບວ່າເປັນພະລັງເພື່ອຄວາມເຂົ້າໃຈ ແລະ ອັດຕະລັກ ແລະ ສະທ້ອນການປະຕິເສດທີ່ຈະໃຫ້ເວທີແກ່ການຮຸກຮານ, ການຈໍາແນກ ຫຼື ການລຸກຄາມ.
- ຄຸນສົມບັດ
  ຜົນງານທີ່ສົ່ງຕ້ອງເປັນຜົນງານສ້າງສັນຕົ້ນສະບັບ ຫຼື ສົ່ງໂດຍໄດ້ຮັບອະນຸຍາດຢ່າງຄົບຖ້ວນຈາກຜູ້ສ້າງຜົນງານ. ທຸກຜົນງານທີ່ສົ່ງຕ້ອງມີຢ່າງໜ້ອຍໜຶ່ງລະບົບອັກສອນນອກເໜືອຈາກອັກສອນລາຕິນ ທີ່ເປັນສ່ວນທີ່ຫຼວງຫຼາຍຂອງຂໍ້ຄວາມ (ຄໍາດຽວ ຫຼື ການຕົບແຕ່ງເລັກນ້ອຍ ແມ່ນບໍ່ພຽງພໍ) ແລະ ຢູ່ໃນປະເພດສື່ຂອງການປະກວດ. ພວກເຮົາຍິນດີຮັບຜົນງານ

ທີ່ເຜີຍແຜ່ແລ້ວ, ຜົນງານທີ່ກຽມເຜີຍແຜ່ ແລະ ຜົນງານທີ່ຍັງບໍ່ເຜີຍແຜ່ ລວມທັງໂຄງການຂອງນັກສຶກສາ ແລະ ໂຄງການຝຶກງານທີ່ໝາຍລະບຸຢ່າງຊັດເຈນ.

- ລິຂະສິດ ແລະ ສິດການນຳໃຊ້
  ເມື່ອສົ່ງຜົນງານ ທ່ານຢືນຢັນວ່າທ່ານມີສິດທີ່ຈຳເປັນໃນຜົນງານຂອງຕົນ. ທ່ານໃຫ້ສິດອະນຸຍາດທີ່ບໍ່ຜູກຂາດແກ່ GRANSHAN ແລະ ຄູ່ຮ່ວມງານ ໃນການນຳສະເໜີຜົນງານຂອງທ່ານໃນນິທັດສະການ, ສິ່ງພິມ ແລະ ສື່ທີ່ກ່ຽວຂ້ອງກັບລາງວັນ – ໂດຍລະບຸຊື່ຜູ້ສ້າງຜົນງານຢ່າງເໝາະສົມສະເໝີ. ຖ້າຜົນງານຂອງທ່ານມີສິ່ງຂອງບຸກຄົນທີສາມ ທ່ານຕ້ອງຮັບຜິດຊອບໃນການຈັດຫາສິດການນຳໃຊ້ສິ່ງເຫຼົ່ານັ້ນ. ໂຄງການທີ່ເປັນຄວາມລັບ ຫຼື ມີຂໍ້ກຳນົດຫ້າມເຜີຍແຜ່ຊົ່ວຄາວ ຈະໄດ້ຮັບການຈັດການຢ່າງຮອບຄອບລະມັດລະວັງ.

ຄຳໝັ້ນສັນຍາເຫຼົ່ານີ້ຮັກສາໃຫ້ GRANSHAN Bloom Award ຢັ່ງຮາກໃນຄວາມເປັນທຳ ແລະ ຄວາມຊື່ສັດ – ເພື່ອໃຫ້ການຍົກຍ້ອງລະບົບອັກສອນ ແລະ ການອອກແບບຍັງຄົງເປີດກວ້າງ, ຮັບທຸກຄົນເຂົ້າຮ່ວມ ແລະ ມີຊີວິດຊີວາ ເຊັ່ນດຽວກັບຊຸມຊົນທີ່ລາງວັນນີ້ຮັບໃຊ້.

ຖະແຫຼງຄຳໝັ້ນສັນຍາຂອງ **GRANSHAN**
ໃນຖານະສູນກາງອັດຕະລັກທາງສາຍຕາລະດັບໂລກ GRANSHAN ຍົກຍ້ອງຟອນ ແລະ ການຈັດວາງຕົວອັກສອນ, ການອອກແບບ ແລະ ການສື່ສານ. ຜ່ານການດຳເນີນງານນີ້ GRANSHAN ສະໜັບສະໜູນໃຫ້ຊຸມຊົນ, ວັດທະນະທຳ ແລະ ທຸລະກິດພັດທະນາໄປ ໂດຍຮັກສາຄວາມສົມດຸນລະຫວ່າງລະດັບທ້ອງຖິ່ນ, ພາກພື້ນ ແລະ ໂລກ. GRANSHAN ເປັນໂຄງການເພື່ອຄວາມເຂົ້າໃຈລະຫວ່າງປະເທດ: ການສື່ສານທີ່ໃຊ້ຟອນຄຸນນະພາບສູງ ແລະ ການຈັດວາງຕົວອັກສອນທີ່ເປັນເລີດ ຊ່ວຍໃຫ້ການສື່ສານເກີດຂຶ້ນ ແລະ ເສີມພະລັງໃຫ້ອັດຕະລັກ. ທ່າທີຂອງພວກເຮົາບໍ່ເຄີຍກີດກັນ ແຕ່ເປີດກວ້າງ ແລະ ຮັບທຸກຄົນເຂົ້າຮ່ວມ.

ໃນຂະນະດຽວກັນ ພວກເຮົາຕະໜັກເຖິງສະຖານະການຂັດແຍ່ງອັນຫຼາກຫຼາຍ ແລະ ຄວາມບໍ່ເປັນທຳທຸກຮູບແບບທົ່ວໂລກ; ໃນຖານະໂຄງການທີ່ດຳເນີນງານລະດັບໂລກ ພວກເຮົາພົບກັບສິ່ງເຫຼົ່ານີ້ເປັນປະຈຳ. ພວກເຮົາຕະໜັກເຖິງຄວາມທ້າທາຍ ແລະ ຄວາມສ່ຽງທີ່ຈະຜິດພາດໃນການຕັດສິນເລືອງຕ່າງໆຈາກມຸມມອງຄົນພາຍນອກ. ໃນບັນດາຜູ້ກໍ່ຕັ້ງ ແລະ ຜູ້ສະໜັບສະໜູນ GRANSHAN Foundation ມີຫຼາຍຄົນທີ່ມີທັດສະນະອັນໝັກແໜ້ນໃນເລືອງເຫຼົ່ານີ້. ພວກເຮົາເຄົາລົບທັດສະນະເຫຼົ່ານັ້ນ ແລະ – ຕາບໃດທີ່ມີຄວາມເຄົາລົບ ແລະ ຄວາມເປີດກວ້າງຕໍ່ກັນ – ພວກເຮົາຍິນດີເປີດຮັບຄວາມຫຼາກຫຼາຍຂອງທັດສະນະເຫຼົ່ານີ້ ແລະ ຮັບຄວາມທ້າທາຍໃນການສ້າງຄວາມເຂົ້າໃຈເຊິ່ງກັນ ແລະ ກັນ.

ໃນທຸກກິດຈະກຳຂອງພວກເຮົາ ຂອບເຂດທີ່ຍອມຮັບບໍ່ໄດ້ແມ່ນຊັດເຈນ: ພວກເຮົາບໍ່ສາມາດໃຫ້ເວທີແກ່ຜູ້ໃດທີ່ອອກສຽງສະໜັບສະໜູນສົ່ງຄາມຮຸກຮານໃນຮູບແບບໃດກໍ່ຕາມ, ການກໍ່ການຮ້າຍ ຫຼື ການຈຳແນກ ແລະ ການລຸກຄາມທຸກປະເພດ. ພວກເຮົາຢືນຢັດເພື່ອລະບຽບໂລກທີ່ຕັ້ງຢູ່ເທິງກົດໝາຍສາກົນ, ຄວາມເຂົ້າໃຈເຊິ່ງກັນ ແລະ ກັນ ແລະ ຄວາມຮ່ວມມື.

ຄຳຖະແຫຼງດ້ານຄຸນສົມບັດ ແລະ ລິຂະສິດ

1. ເກນຄຸນສົມບັດ

1.1 ຜົນງານທີ່ສົ່ງຕ້ອງເປັນຜົນງານສ້າງສັນຕົ້ນສະບັບທີ່ຜູ້ສົ່ງຜົນງານສ້າງຂຶ້ນ ຫຼື ສົ່ງໂດຍໄດ້ຮັບອະນຸຍາດຢ່າງຊັດແຈ້ງຈາກຜູ້ສ້າງຜົນງານຕົ້ນສະບັບ.

1.2 ຜົນງານທີ່ສົ່ງທີ່ມີຄຸນສົມບັດ ຕ້ອງມີຢ່າງໜ້ອຍໜຶ່ງລະບົບອັກສອນນອກເໜືອຈາກອັກສອນລາຕິນ ແລະ ຢູ່ໃນປະເພດສື່ທີ່ການປະກວດກຳນົດ.

1.3 ຮັບການສົ່ງຜົນງານໃນຮູບແບບຕໍ່ໄປນີ້:

- ຜົນງານທີ່ເຜີຍແຜ່ແລ້ວ (ເຜີຍແຜ່ເພື່ອການຄ້າ ຫຼື ສ້າງຂຶ້ນຕາມການວ່າຈ້າງ)
- ຜົນງານທີ່ກຽມເຜີຍແຜ່ (ຍັງບໍ່ເປີດຕົວ ແຕ່ມີເຈດຕະນາຈະເຜີຍແຜ່)
- ຜົນງານທີ່ຍັງບໍ່ເຜີຍແຜ່ (ອີງໃສ່ແນວຄິດ, ການຄົ້ນຄວ້າ ຫຼື ການສຳຫຼວດຄວາມເປັນໄປໄດ້)

1.4 ໂຄງການຂອງນັກສຶກສາ ແລະ ໂຄງການຝຶກງານມີສິດສະໝັກ ແລະ ຕ້ອງໝາຍລະບຸໃຫ້ຊັດເຈນວ່າເປັນໂຄງການປະເພດນີ້ໃນເວລາສົ່ງຜົນງານ.

2. ລິຂະສິດ ແລະ ສິດການນຳໃຊ້

2.1 ລິຂະສິດທັງໝົດໃນຜົນງານທີ່ສົ່ງຍັງຄົງເປັນຂອງຜູ້ສົ່ງຜົນງານ. ການເຂົ້າຮ່ວມໝາຍເຖິງການທີ່ຜູ້ສົ່ງຜົນງານໃຫ້ GRANSHAN ແລະ ຄູ່ຮ່ວມງານ ສະເພາະສິດການນຳໃຊ້ທີ່ຈຳກັດ ແລະ ລະບຸໄວ້ຂ້າງລຸ່ມນີ້ເທົ່ານັ້ນ ເພື່ອຈຸດປະສົງທີ່ກ່ຽວຂ້ອງກັບ GRANSHAN Bloom Award ເທົ່ານັ້ນ.

2.2 ໂດຍການສົ່ງຜົນງານ ຜູ້ສົ່ງຜົນງານຢືນຢັນວ່າ ຕົນເປັນຜູ້ຖືລິຂະສິດຕາມກົດໝາຍໃນຜົນງານທີ່ສົ່ງ ຫຼື ໄດ້ຮັບອະນຸຍາດຢ່າງຄົບຖ້ວນເປັນລາຍລັກອັກສອນຈາກຜູ້ຖືລິຂະສິດໂດຍຊອບທຳ.

2.3 ຜູ້ສົ່ງຜົນງານໃຫ້ GRANSHAN ແລະ ຄູ່ຮ່ວມງານທາງການ ສິດອະນຸຍາດທີ່ບໍ່ຜູກຂາດ, ໃຊ້ໄດ້ທົ່ວໂລກ ແລະ ບໍ່ເສຍຄ່າ ລິຂະສິດ ໃນການ:

- ສຳເນົາ, ສະແດງ ແລະ ແຈກຢາຍຜົນງານ ເພື່ອຈຸດປະສົງທີ່ບໍ່ແມ່ນການຄ້າ ແລະ ກ່ຽວຂ້ອງກັບ GRANSHAN Bloom Award ລວມເຖິງນິທັດສະການ, ສິ່ງພິມ ແລະ ສິ່ງພິມດິຈິຕອນ, ເອກະສານບັນທຶກ ແລະ ສື່ປະຊາສຳພັນທີ່ກ່ຽວຂ້ອງກັບລາງວັນ.
- ເກັບເຂົ້າຄັງ ແລະ ນຳສະເໜີຜົນງານໃນສິ່ງພິມ, ການຄົ້ນຄວ້າ ຫຼື ການທົບທວນຍ້ອນຫຼັງຂອງ GRANSHAN ໃນອະນາຄົດ ໂດຍລະບຸຊື່ຜູ້ສ້າງຜົນງານຢ່າງເໝາະສົມ.

3. ການນຳໃຊ້ສື່ຂອງບຸກຄົນທີສາມ

3.1 ຖ້າຜົນງານທີ່ສົ່ງມີອົງປະກອບ ເຊັ່ນ ຟອນ, ຮູບພາບ ຫຼື ຊັບສິນທາງປັນຍາຂອງບຸກຄົນທີສາມ ຜູ້ສົ່ງຜົນງານຕ້ອງຮັບຜິດຊອບແຕ່ພຽງຜູ້ດຽວໃນການຈັດຫາສິດການນຳໃຊ້ທັງໝົດທີ່ຈຳເປັນ.

3.2 ຜູ້ຈັດ GRANSHAN Bloom Award ບໍ່ຮັບຜິດທາງກົດໝາຍຕໍ່ການລະເມີດລິຂະສິດ ຫຼື ການຮຽກຮ້ອງທາງກົດໝາຍໃດໆທີ່ກ່ຽວຂ້ອງ ເຊິ່ງເກີດຈາກການສົ່ງຜົນງານທີ່ມີສື່ຂອງບຸກຄົນທີສາມໂດຍບໍ່ໄດ້ຮັບອະນຸຍາດ.

4. ຜົນງານທີ່ເປັນຄວາມລັບ ຫຼື ຍັງບໍ່ເປີດຕົວ

4.1 ຜູ້ສົ່ງຜົນງານອາດລະບຸວ່າການສົ່ງຜົນງານຂອງຕົນມີສື່ທີ່ເປັນຄວາມລັບ ຫຼື ຍັງບໍ່ເປີດຕົວ. ຜົນງານທີ່ສົ່ງເຫຼົ່ານີ້ຈະໄດ້ຮັບການຈັດການຢ່າງຮອບຄອບລະມັດລະວັງ ແລະ ຈະບໍ່ຖືກສະແດງຕໍ່ສາທາລະນະ ຈົນກວ່າຈະໄດ້ຮັບອະນຸຍາດເປັນລາຍລັກອັກສອນ ຫຼື ເຖິງວັນເຜີຍແຜ່ທີ່ຕົກລົງກັນ.

4.2 ຜູ້ສົ່ງຜົນງານຍັງອາດຂໍໃຫ້ຫ້າມເຜີຍແຜ່ຊົ່ວຄາວ ຫຼື ຈຳກັດການສະແດງຕາມເງື່ອນໄຂ ເຊິ່ງຈະໄດ້ຮັບການປະຕິບັດຕາມເທົ່າທີ່ເປັນໄປໄດ້.

5. ຄຳຖະແຫຼງຍອມຮັບຂໍ້ຕົກລົງ

ຜູ້ສ້າງຜົນງານທຸກຄົນຕ້ອງຍອມຮັບຄຳຖະແຫຼງຕໍ່ໄປນີ້ໃນເວລາສ້າງຜົນງານ: "ຂ້າພະເຈົ້າຂໍຖະແຫຼງວ່າ ຜົນງານທີ່ສ້າງເປັນຜົນງານສ້າງສັນຕົ້ນສະບັບ, ຂ້າພະເຈົ້າເປັນຜູ້ຖືລິຂະສິດ ຫຼື ໄດ້ຈັດຫາສິດທັງໝົດທີ່ຈຳເປັນໃນການສ້າງຜົນງານນີ້ແລ້ວ ແລະ ຂ້າພະເຈົ້າຍອມຮັບ ແລະ ປະຕິບັດຕາມເງື່ອນໄຂດ້ານຄຸນສົມບັດ ແລະ ລິຂະສິດຂອງ GRANSHAN Bloom Award."

ລະບົບອັກສອນອັນເປັນທີ່ຮັກ, ໂລກອັນເປັນທີ່ຮັກ

ເສັ້ນທາງນີ້ – ຈາກຄວາມຊ່ຽວຊານສ່ວນບຸກຄົນໄປສູ່ການຍອມຮັບຮ່ວມກັນ – ບັນລຸຈຸດສູງສຸດທັງໃນລາງວັນ ແລະ ໃນການເປັນທີ່ຮູ້ຈັກຮ່ວມກັນ, ການສົນທະນາ ແລະ ການສະທ້ອນຕອບຮັບຂ້າມວັດທະນະທຳ.

ນີ້ແມ່ນການຍົກຍ້ອງທີ່ດຳລົງຢູ່ນອກເໜືອຈາກໂລກດິຈິຕອນ ແລະ ສິ່ງທີ່ຜ່ານໄປພຽງຊົ່ວຄາວ – ຢັ່ງຮາກຢູ່ໃນຮູບແບບທີ່ຈັບຕ້ອງໄດ້, ໃນພື້ນທີ່ສາທາລະນະ ແລະ ໃນສາຍສຳພັນທາງວັດທະນະທຳອັນເລິກເຊິ່ງລະຫວ່າງຜູ້ຄົນ ແລະ ລະບົບອັກສອນຂອງຕົນ.

ໃນຫຼາຍພາກສ່ວນຂອງໂລກ – ຈາກອາເມນີເຖິງເກົາຫຼີ, ຈາກໄທເຖິງອະນຸທະວີບອິນເດຍ – ລະບົບອັກສອນເປັນຫຼາຍກວ່າເຄື່ອງມືສື່ສານ ເພາະຍັງເປັນສັນຍາລັກອັນມີພະລັງຂອງອັດຕະລັກ, ຄວາມຮູ້ສຶກເປັນສ່ວນໜຶ່ງ ແລະ ຄວາມສືບເນື່ອງ.

ເສັ້ນທາງຂອງ GRANSHAN ເຄົ້າລົບສາຍສຳພັນນີ້: ສິດໃນການຂຽນ, ສິດທີ່ຈະມີຜູ້ເຫັນ, ສິດທີ່ຈະມີຜູ້ອ່ານ.

ດ້ວຍຈິດໃຈເຊັ່ນນີ້ – ທີ່ບໍ່ຈຳກັດຢູ່ພຽງແຕ່ດຽວ ແຕ່ແຜ່ຂະຫຍາຍອອກໄປຂ້າມລະບົບອັກສອນ ແລະ ພາກພື້ນ – ພວກເຮົາຈຶ່ງຍົກຍ້ອງຄວາມອຸດົມສົມບູນຂອງການອອກແບບທົ່ວໂລກ.

ທີມງານ **GRANSHAN Bloom Award**

GRANSHAN

https://next.granshan.com/lo/awards/bloom/guidelines · 19 ພະຈິກ 2026